# ການຫລຸດຜ່ອນຄວາມສ່ຽງຕໍ່ສຸຂະພາບຂອງຊຸມຊົນ ທີ່ຕິດພັນກັບການຄ້າຂາຍສັດປ່າລ້ຽງລູກດ້ວຍນ້ຳນົມທີ່ມີຊີວິດ ຢູ່ຕະຫຼາດສົດ

**ຂໍ້ແນະນຳຊົ່ວຄາວ**

**12 ເມສາ 2021**

## ສະຫຼຸບສັງລວມ

ຕະຫຼາດສົດຊຸມຊົນ[i] ຊຶ່ງບໍ່ແມ່ນຊຸບເປີມາເກັດ ແມ່ນສາມາດພົບເຫັນທົ່ວໄປ ຢູ່ຫຼາຍປະເທດໃນໂລກ. ຕະຫຼາດດັ່ງກ່າວ ເປັນໜຶ່ງໃນອົງປະກອບທາງສັງຄົມຂອງຊຸມຊົນ ແລະ ເປັນແຫຼ່ງສະໜອງອາຫານສົດຕົ້ນຕໍ ທີ່ລາຄາບໍ່ແພງ ສຳລັບບັນດາກຸ່ມຄົນທີ່ມີລາຍໄດ້ຕ່ຳ ແລະ ເປັນແຫຼ່ງການດຳລົງຊີວິດທີ່ສຳຄັນ ຂອງປະຊາກອນຫຼາຍລ້ານຄົນທີ່ອາໄສຢູ່ເຂດຕົວເມືອງ ແລະ ຊົນນະບົດໃນທົ່ວໂລກ.

ຕະຫຼາດສົດຊຸມຊົນຖືກຈັດສັນຄຸ້ມຄອງໂດຍອຳນາດການປົກຄອງຂັ້ນສູນກາງ ຫຼື ທ້ອງຖິ່ນທີ່ກ່ຽວຂ້ອງ; ໃນນັ້ນການດຳເນີນກິດຈະການທີ່ມີລະດັບມາດຕະຖານດ້ານສຸຂາພິບານ ແລະ ສຸຂະອະນາໄມສູງ ແມ່ນຈະມີຄວາມປອດໄພ ຕໍ່ທັງຜູ້ຄ້າຂາຍ ແລະ ຜູ້ທີ່ມາຈັບຈ່າຍຊື້ເຄື່ອງໃນຕະຫຼາດ.

ບັນຫາສຳຄັນສາມາດເກີດຂຶ້ນໄດ້ ຫາກຕະຫຼາດດັ່ງກ່າວອະນຸຍາດໃຫ້ມີການຂາຍ ແລະ ການຂ້າຄົວສັດທີ່ຍັງມີຊີວິດ, ໂດຍສະເພາະແມ່ນສັດປ່າທີ່ບໍ່ສາມາດປະເມີນຄວາມສ່ຽງທີ່ອາດຈະເກີດຂຶ້ນຢ່າງແນ່ນອນ - ຢູ່ສະຖານເປີດແປນໃນຊຸມຊົນ. ເມື່ອສັດປ່າ[ii] ຖືກຂັງໄວ້ໃນກົງ ຫຼື ໃນຄອກ, ຖືກຂ້າຄົວ ແລະ ຕັດເປັນຊິ້ນສ່ວນຢູ່ໃນບໍລິເວນຕະຫຼາດຢ່າງເປີດເຜີຍ, ບໍລິເວນດັ່ງກ່າວຈະຖືກປົນເປື້ອນດ້ວຍຂອງແຫຼວຈາກຮ່າງກາຍສັດ, ອາຈົມ ແລະ ສິ່ງເສດເຫຼືອອື່ນໆ ຊຶ່ງມັນເພີ່ມຄວາມສ່ຽງຂອງການສົ່ງຕໍ່ຂອງເຊື້ອພະຍາດ ຫາຜູ້ຄ້າຂາຍ ແລະ ລູກຄ້າໃນຕະຫຼາດ ແລະ ສາມາດນຳໄປສູ່ການແຜ່ກະຈາຍເຊື້ອພະຍາດສູ່ສັດອື່ນໆໃນຕະຫຼາດ. ສະພາບແວດລ້ອມດັ່ງກ່າວໄດ້ສ້າງໂອກາດໃຫ້ແກ່ເຊື້ອຈຸລະໂລກ ທີ່ສັດເປັນໂຕຖືເຊື້ອ ລວມທັງຈຸລະໂລກໂຄໂຣນາ ໄດ້ແຜ່ຂະຫຍາຍ ແລະ ຕິດຕໍ່ໃສ່ພາຫະນຳເຊື້ອໃໝ່ ລວມທັງຄົນ.

ພະຍາດຕິດຕໍ່ທີ່ເກີດຂຶ້ນສ່ວນຫຼາຍເຊັ່ນ: ພະຍາດໄຂ້ລາດຊາ (Lassa fever), ພະຍາດໄຂ້ຈາກການຕິດເຊື້ອໄວຣັດມາຣ໌ບວກ (Marburg haemorrhagic fever), ພະຍາດຕິດເຊື້ອໄວຣັດນິປາ (Nipah viral infection) ແລະ ພະຍາດຈາກເຊື້ອຈຸລະໂລກອື່ນໆ - ລ້ວນແຕ່ມີແຫຼ່ງເກີດຈາກສັດປ່າ. ໃນຕະກຸນໄວຣັດໂຄໂຣນາ ເຊື້ອໄວຣັດຕິດຕໍ່ຈາກສັດສູ່ຄົນ ໄດ້ມີຄວາມກ່ຽວພັນກັບການລະບາດ ຂອງພະຍາດລະບົບທາງເດີນຫາຍໃຈຮຸນແຮງ ຫຼື ພະຍາດຊາສ (SARS) ໃນປີ 2003 ແລະ ພະຍາດລະບົບທາງເດີນຫາຍໃຈຕາເວັນອອກກາງ ຫຼື ພະຍາດເມີດ (MERS) ທີ່ຖືກກວດກາພົບຄັ້ງທຳອິດໃນປີ 2012. ການລະບາດຂອງພະຍາດໂຄວິດ-19 ໄດ້ເກີດມາຈາກການຕິດເຊື້ອຈຸລະໂລກສາຍພັນໃໝ່ SARS-CoV-2 ໃນຄົນ. ເຖິງແມ່ນວ່າ ກົນໄກສະເພາະຂອງການເກີດເຊື້ອພະຍາດ SARS-CoV-2 ຍັງບໍ່ທັນສາມາດກຳນົດໄດ້ຢ່າງແນ່ນອນ , ແຕ່ໃນຈຸດໃດໜຶ່ງ ຫຼື ໃນເວລາໃດໜຶ່ງ ການປະເຊີນກັນອາດເກີດມີຂຶ້ນ ສິ່ງທີ່ສົ່ງຜົນເຮັດໃຫ້ມີການສົ່ງເຊື້ອພະຍາດຫາກັນ ແລະ ບາງທີອາດເຮັດໃຫ້ມີການສົ່ງຕໍ່ເຊື້ອພະຍາດໃນຫຼາຍໆຊະນິດ. ອົງການອະນາໄມໂລກ (WHO), ອົງການອາຫານ ແລະ ການກະເສດ ແຫ່ງສະຫະປະຊາຊາດ (FAO), ອົງການສຸຂະພາບສັດສາກົນ (OIE) ແລະ ອົງການສິ່ງແວດລ້ອມຂອງສະຫະປະຊາຊາດ (UNEP) ໄດ້ຮັບຮູ້ການເກີດຂຶ້ນຊ້ຳແລ້ວຊ້ຳອີກ ຂອງພະຍາດຕິດຕໍ່ຈາກສັດສູ່ຄົນ ແລະ ຄວາມກ່ຽວພັນຂອງມັນໃນຕ່ອງໂສ້ມູນຄ່າຂອງການຄ້າຂາຍສັດປ່າ.[1]

ສິ່ງທີ່ຄວນສັງເກດແມ່ນ ຄວາມສ່ຽງຂອງພະຍາດຕິດຕໍ່ຈາກສັດສູ່ຄົນ ມີຄວາມແຕກຕ່າງກັນ ລະຫວ່າງ ຊະນິດພັນສັດຕ່າງໆ (ເຊັ່ນ: ຊະນິດພັນສັດເທິງບົກ ແລະ ຊະນິດພັນສັດນ້ຳ) ແລະ ລະຫວ່າງ ລະບົບຟາມລ້ຽງສັດ ແລະ ການຊື້-ຂາຍໃນຕະຫຼາດຕ່າງໆ. ສະນັ້ນ, ການປະເມີນຄວາມສ່ຽງແມ່ນມີຄວາມຈຳເປັນ ເພື່ອກຳນົດຍຸດທະສາດການຄຸ້ມຄອງຄວາມສ່ຽງທີ່ເໝາະສົມ. ສັດປ່າປະເພດລ້ຽງລູກດ້ວຍນ້ຳນົມທີ່ຖືກນຳມາລ້ຽງ ມີຄວາມເປັນໄປໄດ້ທີ່ຈະເປັນໂຕຖືເຊື້ອພະຍາດຕິດຕໍ່ຈາກສັດສູ່ຄົນ ທີ່ອາດຈະກວດກາບໍ່ພົບ ແລະ ມີຜົນກະທົບຕໍ່ຄົນທີ່ສຳພັດກັບພວກມັນ.[26]

---

[i] ຕະຫຼາດສົດຊຸມຊົນ ແມ່ນຄຳສັບທີ່ນຳໃຊ້ໃນເອກະສານສະບັບນີ້ ແມ່ນລວມເອົາຕະຫຼາດສົດ, ຕະຫຼາດນອກລະບົບ ແລະ ຕະຫຼາດກະສິກອນ ທີ່ຂາຍອາຫານທີ່ຜະລິດຈາກສັດ/ບໍ່ຜະລິດຈາກສັດ/ສິນຄ້າປະເພດແຫ້ງ ແລະ ບາງຄັ້ງ ເປັນບ່ອນທີ່ສັດມີຊີວິດຖືກນຳມາຂັງໄວ້ ແລະ ຂ້າຢູ່ກັບທີ່.

[ii] ສັດປ່າ ໝາຍເຖິງ ສັດທີ່ມີກຳມະພັນ (phenotype) ທີ່ບໍ່ໄດ້ຮັບຜົນກະທົບຈາກການຄັດເລືອກຂອງຄົນ ແລະ ທີ່ອາໄສຢູ່ຢ່າງເອກະລາດ ປາສະຈາກຈາກການຄຸ້ມຄອງ ຫຼື ຄວບຄຸມໂດຍກົງຂອງຄົນ. https://www.oie.int*index.php?id=169&L=0&htmfile=glossaire.htm//terme_animal

ອົງການ WHO ໄດ້ເຮັດວຽກຢ່າງໃກ້ຊິດກັບອົງການ FAO, OIE, UNEP ແລະ ອົງການສາກົນອື່ນໆ ເພື່ອຮັບປະກັນໃຫ້ລະບົບອາຫານຂອງໂລກມີຄວາມຍືນຍົງ, ຄວາມປອດໄພ ແລະ ຄວາມໝັ້ນຄົງ ແລະ ໃຫ້ການສະໜັບສະໜູນທາງດ້ານວິຊາການ ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ລະບົບຄວບຄຸມອາຫານແຫ່ງຊາດ. ຈຸດປະສົງຂອງເອກະສານສະບັບນີ້ ແມ່ນເພື່ອສະໜອງຂໍ້ແນະນຳ ສຳລັບອົງການຄຸ້ມຄອງຄວາມປອດໄພດ້ານ

ອາຫານ ແລະ ອົງການທີ່ກ່ຽວຂ້ອງອື່ນໆ ເພື່ອຫຼຸດຜ່ອນຄວາມສ່ຽງຂອງການຕິດຕໍ່ຂອງເຊື້ອພະຍາດໂຄວິດ-19 ແລະ ພະຍາດສັດອື່ນໆທີ່ສາມາດຕິດຕໍ່ສູ່ຄົນ ຢູ່ໃນຕະຫຼາດສົດຊຸມຊົນ. ເຖິງແມ່ນເອກະສານນີ້ສຸມໃສ່ຄວາມສ່ຽງຂອງການເກີດພະຍາດຢູ່ໃນຕະຫຼາດສົດຊຸມຊົນ ບ່ອນທີ່ສັດມີຊີວິດຖືກເອົາຂາຍເປັນອາຫານ, ແຕ່ມັນກໍກ່ຽວຂ້ອງກັບການນໍາໃຊ້ສັດປ່າເພື່ອຈຸດປະສົງອື່ນ. ທຸກການນໍາໃຊ້ສັດປ່າດັ່ງກ່າວ ຮຽກຮ້ອງໃຫ້ມີວິທີການທີ່ສະແດງເຖິງການອະນຸລັກຊີວະນາໆພັນ, ຫຼັກການສະຫວັດດີການສັດ ແລະ ລະບຽບການຂອງປະເທດ ແລະ ສາກົນ ກ່ຽວກັບຊະນິດພັນທີ່ຖືກຂົ່ມຂູ່ ແລະ ໃກ້ຈະສູນພັນ.

ເພື່ອຫຼຸດຜ່ອນຄວາມສ່ຽງຕໍ່ສຸຂະພາບຂອງປະຊາຊົນທີ່ຕິດພັນກັບການຊື້-ຂາຍສັດປ່າເປັນອາຫານຢູ່ຕະຫຼາດສົດຊຸມຊົນ, ອົງການ WHO, OIE ແລະ UNEP ໄດ້ໃຫ້ການແນະນໍາຫຼາຍກິດຈະກໍາ ຊຶ່ງລັດຖະບານຂອງບັນດາປະເທດ ຕ້ອງພິຈາລະນານໍາເອົາມາປະຕິບັດໂດຍດ່ວນ ແນໃສ່ເຮັດໃຫ້ຕະຫຼາດສົດຊຸມຊົນມີຄວາມປອດໄພທີ່ດີຂຶ້ນ ແລະ ຮັບຮູ້ເຖິງບົດບາດສໍາຄັນຂອງຕະຫຼາດດັ່ງກ່າວ ໃນການສະໜອງແຫຼ່ງອາຫານ ແລະ ການດໍາລົງຊີວິດໃຫ້ແກ່ປະຊາຊົນເປັນຈໍານວນຫຼາຍ.

ອົງການ WHO, OIE ແລະ UNEP ຮຽກຮ້ອງມາຍັງບັນດາອົງການທີ່ກ່ຽວຂ້ອງ ໃຫ້ດໍາເນີນກິດຈະກໍາດັ່ງນີ້:

1. ໂຈະການຄ້າຂາຍສັດປ່າຊະນິດພັນລ້ຽງລູກດ້ວຍນໍ້ານົມຍັງມີຊີວິດ ທີ່ຖືກລ່າ ເພື່ອເປັນອາຫານ ຫຼື ເພື່ອນໍາມາລ້ຽງຂະຫຍາຍພັນ ແລະ ປິດພາກສ່ວນຕະຫຼາດຂາຍອາຫານ ທີ່ຂາຍສັດປ່າຊະນິດພັນລ້ຽງລູກດ້ວຍນໍ້ານົມທີ່ຖືກລ່າມາ ແລະ ຍັງມີຊີວິດ[iii] ເພື່ອເປັນມາດຕະການສຸກເສີນ, ເວັ້ນເສຍແຕ່ໄດ້ມີການນໍາໃຊ້ລະບຽບການທີ່ມີປະສິດທິພາບທີ່ສາມາດພິສູດໄດ້ ແລະ ມີການປະເມີນຄວາມສ່ຽງຢ່າງພຽງພໍແລ້ວ[(a)].

2. ເສີມຂະຫຍາຍພື້ນຖານທາງດ້ານລະບຽບການ ເພື່ອປັບປຸງມາດຕະຖານດ້ານສຸຂາພິບານ ແລະ ສຸຂະອະນາໄມ ໃນຕະຫຼາດສົດຊຸມຊົນ ແນໃສ່ຫຼຸດຜ່ອນຄວາມສ່ຽງຂອງການຕິດຕໍ່ຂອງພະຍາດສັດທີ່ສາມາດຕິດຕໍ່ສູ່ຄົນໄດ້. ໃນໄລຍະການລະບາດຂອງພະຍາດໃນປັດຈຸບັນ, ຕ້ອງປະຕິບັດມາດຕະການເພີ່ມເຕີມເຊັ່ນ: ການຄວບຄຸມຄວາມແອອັດຂອງມວນຊົນ ແລະ ການຮັກສາໄລຍະຫ່າງ, ການຈັດສະຖານທີ່ລ້າງມື ແລະ ສຸຂະອະນາໄມ ລວມທັງການສຶກສາອົບຮົມ ກ່ຽວກັບສຸຂະພາບລະບົບທາງເດີນຫາຍໃຈ ຢູ່ໃນບໍລິເວນຕະຫຼາດ ເພື່ອຈໍາກັດຄວາມເປັນໄປໄດ້ຂອງການສົ່ງຕໍ່ພະຍາດຈາກຄົນສູ່ຄົນ.

3. ດໍາເນີນການປະເມີນຄວາມສ່ຽງ ເພື່ອສະໜອງຫຼັກຖານພື້ນຖານແກ່ການສ້າງລະບຽບການ ເພື່ອຄວບຄຸມຄວາມສ່ຽງຂອງການສົ່ງຕໍ່ເຊື້ອພະຍາດທີ່ສາມາດຕິດຕໍ່ຈາກສັດສູ່ຄົນ ຈາກສັດປ່າທີ່ລ້ຽງໃນຟາມ ແລະ ສັດປ່າທີ່ຖືກລ່າ ເພື່ອນໍາໄປຂາຍຢູ່ຕະຫຼາດ ສໍາລັບການບໍລິໂພກ. ລະບຽບການດັ່ງກ່າວ ຕ້ອງກໍານົດສິ່ງທີ່ສາມາດຊີ້ບອກ ວ່າເປັນສັດປ່າທີ່ລ້ຽງໃນຟາມ ເພື່ອຮັບປະກັນໃຫ້ມັນສາມາດຈໍາແນກໄດ້ ຈາກສັດປ່າທີ່ຖືກລ່າ ແລະ ຕ້ອງລະບຸມາດຕະການຄຸ້ມຄອງຄວາມໝັ້ນຄົງດ້ານຊີວະພາບຢ່າງເຂັ້ມງວດ.

4. ຮັບປະກັນໃຫ້ຜູ້ກວດກາອາຫານໄດ້ຮັບການຝຶກອົບຮົມຢ່າງພຽງພໍ ເພື່ອຮັບປະກັນໃຫ້ທຸລະກິດ ດໍາເນີນຢ່າງສອດຄ່ອງກັບລະບຽບການເພື່ອປົກປ້ອງສຸຂະພາບຂອງຜູ້ຊົມໃຊ້ ແລະ ໃຫ້ເປັນຜູ້ທີ່ຮັບຜິດຊອບ. ນອກຈາກນັ້ນ, ອົງການທີ່ກ່ຽວຂ້ອງທີ່ຮັບຜິດຊອບການຄຸ້ມຄອງຕະຫຼາດສົດຊຸມຊົນ ຕ້ອງໄດ້ມີຄວາມຮັບຮູ້ ແລະ ເຂົ້າໃຈຢ່າງພຽງພໍ ເພື່ອຮັບປະກັນໃຫ້ລະບຽບການທີ່ເລັງໃສ່ການຜະລິດ, ການປຸງແຕ່ງ ແລະ ການຄ້າຂາຍສັດເພື່ອເປັນອາຫານ ໄດ້ຮັບການບັງຄັບໃຊ້ຢ່າງສອດຄ່ອງ.

5. ສ້າງຄວາມເຂັ້ມແຂງແກ່ລະບົບການເຝົ້າລະວັງສຸຂະພາບສັດ ສໍາລັບເຊື້ອພະຍາດສັດທີ່ສາມາດຕິດຕໍ່ສູ່ຄົນ ໂດຍກວມເອົາທັງສັດລ້ຽງ ແລະ ສັດປ່າ. ອັນນີ້ຈະເຮັດໃຫ້ມີລະບົບເຕືອນໄພລ່ວງໜ້າ ກ່ຽວກັບການເກີດເຊື້ອພະຍາດ ແລະ ສະໜອງຫຼັກຖານພື້ນຖານສໍາລັບການພັດທະນາລະບົບຄວບຄຸມ ເພື່ອສະກັດກັ້ນຄວາມສ່ຽງຕໍ່ສຸຂະພາບຂອງຄົນ ໂດຍຕິດພັນກັບລະບົບການເຝົ້າລະວັງສຸຂະພາບຂອງສາທາລະນະຊົນ.

6. ພັດທະນາ ແລະ ຈັດຕັ້ງປະຕິບັດຂະບວນການເຜີຍແຜ່ຂໍ້ມູນຂ່າວສານ ກ່ຽວກັບຄວາມປອດໄພດ້ານອາຫານ ສໍາລັບຜູ້ຄ້າຂາຍໃນຕະຫຼາດ, ເຈົ້າຂອງຮ້ານຂາຍເຄື່ອງ, ຜູ້ບໍລິໂພກ ແລະ ປະຊາຊົນທົ່ວໄປຢ່າງກວ້າງຂວາງ. ຂະບວນການເຜີຍແຜ່ດັ່ງກ່າວຕ້ອງສື່ສານຫຼັກການ ກ່ຽວກັບຄວາມປອດໄພ

[iii] ການອະທິບາຍ ກ່ຽວກັບສັດປ່າໃນເອກະສານສະບັບນີ້ ໝາຍເຖິງ ສັດຊະນິດພັນທີ່ລ້ຽງລູກດ້ວຍນໍ້ານົມ ແລະ ບໍ່ລວມເອົາສັດນໍ້າ.

[(a)] ລະບຽບການທີ່ມີປະສິດທິພາບ ຖືກນິຍາມວ່າແມ່ນ ມາດຕະການທີ່ອີງໃສ່ຄວາມສ່ຽງ ທີ່ບັນລຸການຫຼຸດຜ່ອນຄວາມສ່ຽງ ເພື່ອປົກປ້ອງສຸຂະພາບຂອງຜູ້ບໍລິໂພກ ແລະ ຜູ້ອອກແຮງງານ ແລະ ຮັບປະກັນຄວາມໝັ້ນຄົງທາງດ້ານອາຫານ.

ດ້ານອາຫານ ແລະ ຄວາມສ່ຽງຂອງການເກີດເຊື້ອພະຍາດຕິດຕໍ່ຈາກສັດສູ່ຄົນ ທີ່ເກີດມາຈາກການສໍາພັດ ລະຫວ່າງ ຄົນ ແລະ ສັດ ແລະ ຄວາມສ່ຽງທີ່ຕິດພັນກັບການບໍລິໂພກ ແລະ ການຄ້າຂາຍສັດປ່າ. ນອກຈາກນັ້ນ, ຂະບວນການນີ້ຍັງຕ້ອງເຜີຍແຜ່ຂໍ້ມູນຂ່າວສານ ໃຫ້ແກ່ບັນດາຜູ້ທີ່ມີສ່ວນກ່ຽວຂ້ອງທັງໝົດ ກ່ຽວກັບຄວາມສໍາຄັນຂອງຊີວະນາໆພັນ ແລະ ຄວາມຕ້ອງການນໍາໃຊ້ສັດປ່າ ເພື່ອໃຫ້ຖືກຕ້ອງຕາມກົດໝາຍ, ມີຄວາມຍືນຍົງ, ຄວາມປອດໄພ ແລະ ຄວາມຮັບຜິດຊອບ.

ອົງການ WHO, OIE ແລະ UNEP ມີຄວາມມຸ້ງໝັ້ນໃນການຊ່ວຍເຫຼືອແກ່ລັດຖະບານ ເພື່ອເສີມຂະຫຍາຍລະບຽບການ ກ່ຽວກັບຄວາມປອດໄພດ້ານອາຫານ ເພື່ອເກືອດຫ້າມການຄ້າຂາຍສັດປ່າຍັງມີຊີວິດທີ່ຖືກລ່າ ເພື່ອເອົາເປັນອາຫານ ຍ້ອນວ່າພວກເຮົາຍັງຂາດລະບຽບການທີ່ມີປະສິດທິພາບ ແລະ ເພື່ອກວດກາຄວາມປອດໄພຂອງສັດ ແລະ ຜະລິດຕະພັນສັດທັງໝົດ ສໍາລັບການບໍລິໂພກຂອງຄົນ.

## ພາກແນະນໍາ

### ຄວາມສ່ຽງຕໍ່ສຸຂະພາບຂອງສາທາລະນະຊົນ

ການລະບາດຂອງພະຍາດອັກເສບປອດ ຈາກເຊື້ອຈຸລະໂລກສາຍພັນໃໝ່ (ໂຄວິດ-19) ແມ່ນພາວະສຸກເສີນທາງດ້ານສາທາລະນະສຸກ ທີ່ຮຽກຮ້ອງໃຫ້ມີການໂຕ້ຕອບແບບປະສົມປະສານ ແລະ ມີສ່ວນຮ່ວມຂອງຫຼາຍຂະແໜງການ. ມັນບໍ່ມີຫຼັກຖານທີ່ສະແດງວ່າ ການບໍລິໂພກອາຫານ ເຮັດໃຫ້ເກີດການຕິດຕໍ່ຂອງພະຍາດດັ່ງກ່າວ. ເຊັ່ນດຽວກັນ, ມັນກໍບໍ່ມີຫຼັກຖານທີ່ສະແດງວ່າເຊື້ອຈຸລະໂລກທີ່ເປັນສາເຫດຂອງການລະບາດພະຍາດໂຄວິດ-19 ໃນປັດຈຸບັນນັ້ນແມ່ນສັດເປັນໂຕຖືເຊື້ອເຊັ່ນ: ສັດປີກ, ໝູ, ແກະ ຫຼື ງົວ;[2,28] ມັນຈຶ່ງມີຄວາມເປັນໄປໄດ້ວ່າເຊື້ອຈຸລະໂລກທີ່ເປັນສາເຫດຂອງພະຍາດໂຄວິດ-19 ແມ່ນມາຈາກສັດປ່າ ເພາະວ່າມັນເປັນເຊື້ອຢູ່ໃນຕະກຸນໄວຣັດໂຄໂຣນາ ຊຶ່ງຕາມປົກກະຕິແມ່ນພົບເຫັນໃນເຈຍ.[3,4] ມີຂໍ້ສົມໝຸດຕິຖານໜຶ່ງວ່າ ໃນຕອນຕົ້ນຕົ້ນເຊື້ອໄວຣັດຕິດຕໍ່ສູ່ຄົນ ໂດຍຜ່ານສັດທີ່ເປັນໂຕກາງພາຫະນະນໍາເຊື້ອພະຍາດ ຊຶ່ງມາເຖິງປັດຈຸບັນ ຍັງບໍ່ທັນຮູ້ວ່າແມ່ນສັດອັນໃດ ແລະ ມີຄວາມເປັນໄປໄດ້ອີກຢ່າງໜຶ່ງ ແມ່ນເຊື້ອໄວຣັດໄດ້ຕິດຕໍ່ໃສ່ຄົນໂດຍກົງຈາກຊະນິດພັນສັດປ່າທີ່ເປັນໂຕຖືເຊື້ອພະຍາດດັ່ງກ່າວ.

ບາງກໍລະນີຜູ້ຕິດເຊື້ອພະຍາດໂຄວິດ-19 ທີ່ໄດ້ຮູ້ໃນໄລຍະທໍາອິດຂອງການລະບາດ ມີຄວາມກ່ຽວພັນກັບຕະຫຼາດສົດຂາຍສິ່ງ ຢູ່ເມືອງຫວູຫານ, ສປ ຈີນ, ແຕ່ບາງກໍລະນີ ກໍບໍ່ມີຄວາມກ່ຽວຂ້ອງເລີຍ. ຜູ້ເຈັບປ່ວຍຈາກພະຍາດໂຄວິດ-19 ໃນເບື້ອງຕົ້ນ ຫຼາຍຄົນແມ່ນເຈົ້າຂອງຮ້ານຂາຍເຄື່ອງ, ພະນັກງານທີ່ເຮັດວຽກໃນຕະຫຼາດ ແລະ ຜູ້ທີ່ມັກມາຕະຫຼາດດັ່ງກ່າວເປັນປະຈໍາ. ການວິໄຈຕົວຢ່າງດ້ານສິ່ງແວດລ້ອມທີ່ເກັບກໍາຈາກຕະຫຼາດດັ່ງກ່າວໃນເດືອນທັນວາ 2019 ໄດ້ພົບເຊື້ອພະຍາດ SARS-CoV-2, ຊຶ່ງຊີ້ບອກວ່າຕະຫຼາດຢູ່ເມືອງຫວູຫານ ອາດຈະເປັນແຫຼ່ງເກີດຂອງການລະບາດເຊື້ອພະຍາດ ແລະ/ຫຼື ມັນໄດ້ເຮັດບົດບາດເປັນບ່ອນຂະຫຍາຍການແຜ່ລະບາດຂອງເຊື້ອພະຍາດໃນເບື້ອງຕົ້ນ. ໃນນັ້ນ, ການກໍານົດວ່າແມ່ນ ຫຼື ບໍ່ແມ່ນ ຫຼື ແມ່ນສັດປ່າຊະນິດພັນໃດ ທີ່ມີສ່ວນກ່ຽວຂ້ອງໃນການສົ່ງຕໍ່ເຊື້ອຈຸລະໂລກຈາກສັດສູ່ຄົນໃນເບື້ອງຕົ້ນ ຊຶ່ງມັນຍັງເປັນບັນຫາຂອງການຄົ້ນຄວ້າທີ່ສໍາຄັນ ແລະ ຄໍາຕອບຂອງບັນຫານີ້ ຈະສາມາດຊ່ວຍໃຫ້ພວກເຮົາສາມາດປ້ອງກັນການກັບມາລະບາດຄືນໃໝ່ອີກ ຫຼັງຈາກການລະບາດພະຍາດໃນປັດຈຸບັນຖືກຄວບຄຸມໄດ້ແລ້ວ.

ໃນໄລຍະການການລະບາດຂອງພະຍາດຊາຣ໌ (SARS) ໃນປີ 2003 ຫຼື ເຊື້ອຈຸລະໂລກ SARS-CoV-1 ໄດ້ຖືກສະກັດແຍກອອກຈາກສັດປ່າທີ່ມີຊີວິດ ທີ່ຂາຍຢູ່ຕະຫຼາດສົດແຫ່ງໜຶ່ງຂອງຈີນ[6]. ເຫດການນີ້ສະແດງວ່າ ຕະຫຼາດສົດໄດ້ສ້າງສະພາບແວດລ້ອມທີ່ເອື້ອອໍານວຍແກ່ເຊື້ອໄວຣັດໂຄໂຣນາທີ່ມີຢູ່ໃນສັດ ໃຫ້ແຜ່ຂະຫຍາຍ ແລະ ຕິດຕໍ່ສູ່ພາຫະນະນໍາເຊື້ອອື່ນໆ ລວມທັງຄົນ[6]. ຫຼັກຖານຂອງການຕິດເຊື້ອພະຍາດ SARS-CoV-1 ໄດ້ຖືກຄົ້ນພົບຢູ່ໃນຄົນທີ່ເຮັດວຽກຢູ່ຕະຫຼາດຄ້າຂາຍສັດທີ່ມີຊີວິດ ແລະ ຫຼາຍກໍລະນີຂອງຜູ້ຕິດເຊື້ອພະຍາດໃນເບື້ອງຕົ້ນແມ່ນພໍ່ຄົວອາຫານ ຫຼື ຜູ້ເຮັດວຽກໃນຮ້ານອາຫານ ທີ່ມີການສໍາຜັດກັບສັດປ່າ ເພື່ອກະກຽມປຸງແຕ່ງເປັນອາຫານ,[5,6,27] ຊຶ່ງມັນສະແດງເຖິງການເຊື່ອມໂຍງ ລະຫວ່າງ ການຄ້າຂາຍ ແລະ ການປຸງແຕ່ງອາຫານຈາກສັດປ່າ ແລະ ການຕິດຕໍ່ຂອງພະຍາດ SARS-CoV-1.

ເຖິງແມ່ນພະຍາດ SARS-CoV-1 ແລະ SARS-CoV-2 ຖືກຈັດຢູ່ໃນກຸ່ມພະຍາດລະບົບທາງເດີນຫາຍໃຈ ທີ່ພົບໃນສັດລ້ຽງລູກດ້ວຍນໍ້ານົມ, ແຕ່ເຊື້ອໄວຣັດອື່ນກໍສາມາດຕິດຕໍ່ ໂດຍຜ່ານສັດທີ່ບໍ່ແມ່ນສັດລ້ຽງລູກດ້ວຍນໍ້ານົມທີ່ຖືກຄ້າຂາຍຢູ່ຕະຫຼາດສົດໄດ້ເຊັ່ນດຽວກັນ. ໃນໄລຍະການລະບາດຂອງພະຍາດໄຂ້ຫວັດສັດປີກ ສາຍພັນ A (H5N1) ສູ່ຄົນ ໃນປີ 1997,[7] ການໄປຕະຫຼາດຂາຍສັດປີກທີ່ຍັງມີຊີວິດຄັ້ງໜຶ່ງກ່ອນໜ້າໜຶ່ງອາທິດ ຂອງການເລີ່ມເຈັບປ່ວຍ ມັນໄດ້ມີຄວາມກ່ຽວພັນທີ່ສໍາຄັນ ທີ່ສ່ຽງຕໍ່ການຕິດເຊື້ອພະຍາດ.

ເຊື້ອໄວຣັດພະຍາດໄຂ້ຫວັດສັດປີກ ບໍ່ສາມາດຕິດຕໍ່ໄດ້ຈາກອາຫານທີ່ປຸງແຕ່ງສຸກດີ, ແຕ່ມັນສາມາດຕິດຕໍ່ໃສ່ຄົນໄດ້ ຈາກການສໍາຜັດຈັບບາຍກັບສັດທີ່ຕິດເຊື້ອພະຍາດ ແລະ ຈາກຂ້າຄົວສັດຢູ່ບໍລິເວນຕະຫຼາດສົດ. ສະນັ້ນ, ຕ້ອງຈໍາກັດທີ່ສຸດເທົ່າທີ່ເປັນໄປໄດ້ ໃນການສໍາພັດໃກ້ຊິດ ລະຫວ່າງຄົນ ກັບສັດມີຊີວິດ, ການຂ້າຄົວສັດ ໃນຕະຫຼາດດັ່ງກ່າວ.

ການດໍາເນີນການຄວບຄຸມທີ່ມີຜົນສໍາເລັດ ເພື່ອຫຼຸດຜ່ອນຄວາມສ່ຽງຂອງການຕິດຕໍ່ຂອງເຊື້ອພະຍາດຈາກສັດສູ່ຄົນ ໃນລະຫວ່າງການຄ້າຂາຍສັດມີຊີວິດຢູ່ຕະຫຼາດ ຮຽກຮ້ອງໃຫ້ມີວິທີການສຸຂະພາບໜຶ່ງດຽວ (One Health approach). ອັນນີ້ໝາຍເຖິງການຮ່ວມມື ລະຫວ່າງ ເຈົ້າໜ້າທີ່ຮັກສາສຸຂະພາບຄົນ, ເຈົ້າໜ້າທີ່ຄວາມປອດໄພດ້ານອາຫານ, ສັດຕະວະແພດ ແລະ ບັນດາອົງການສັດປ່າ, ປ່າໄມ້ ແລະ ສິ່ງແວດລ້ອມ.[8]

ອົງການ WHO, OIE ແລະ UNEP ໄດ້ສ້າງຂໍ້ແນະນໍາຊົ່ວຄາວສະບັບນີ້ ສໍາລັບອົງການຮັບຜິດຊອບຄວາມປອດໄພດ້ານອາຫານຂອງປະເທດ ກ່ຽວກັບວິທີການ ຊຶ່ງພວກເຂົາສາມາດຫຼຸດຜ່ອນຄວາມສ່ຽງຂອງການຕິດຕໍ່ເຊື້ອພະຍາດຂອງຄົນ ແລະ ສະກັດກັ້ນຄວາມສ່ຽງຂອງການແຜ່ລະບາດຂອງພະຍາດໂຄວິດ-19 ແລະ ພະຍາດອື່ນໆທີ່ສາມາດຕິດຕໍ່ຈາກສັດສູ່ຄົນ ຢູ່ຕະຫຼາດສົດຊຸມຊົນ ຫຼື ຕະຫຼາດຂາຍສັດທີ່ມີຊີວິດ.

## ຕະຫຼາດອາຫານພື້ນເມືອງ

ຕະຫຼາດອາຫານພື້ນເມືອງ (traditional food market) ຊຶ່ງບາງຄັ້ງເອີ້ນວ່າ "ຕະຫຼາດສົດ" ມີຄວາມແຕກຕ່າງກັນຕາມແຕ່ລະປະເທດ ຫຼື ແຕ່ລະແຂວງ ໂດຍຂຶ້ນກັບວັດທະນະທໍາ, ສະພາບເງື່ອນໄຂທາງດ້ານເສດຖະກິດ-ສັງຄົມ, ຄວາມຫຼາກຫຼາຍຂອງອາຫານ ແລະ ຄວາມນິຍົມອາຫານໃນທ້ອງຖິ່ນ; ຢູ່ຫຼາຍປະເທດ, ຕະຫຼາດດັ່ງກ່າວ ແມ່ນແຫຼ່ງຕົ້ນຕໍຂອງອາຫານສົດທີ່ມີລາຄາບໍ່ແພງ, ໂດຍສະເພາະສໍາລັບບັນດາກຸ່ມຄົນທີ່ມີລາຍໄດ້ຕໍ່າ; ຕະຫຼາດສົດ ມີບົດບາດສໍາຄັນທາງດ້ານເສດຖະກິດ, ວັດທະນະທໍາ ແລະ ສັງຄົມ ແລະ ເປັນແຫຼ່ງການດໍາລົງຊີວິດຂອງປະຊາກອນຈໍານວນຫຼາຍລ້ານຄົນທີ່ອາໄສຢູ່ເຂດຕົວເມືອງ ແລະ ຊົນນະບົດ. ເຖິງຢ່າງໃດກໍຕາມ, ຕະຫຼາດສົດທຸກແຫ່ງ ຕ້ອງມີສິ່ງໜຶ່ງທີ່ສໍາຄັນທີ່ຄືກັນ: ຕ້ອງສະໜອງອາຫານທີ່ປອດໄພ ແລະ ມີໂພຊະນາການໃຫ້ແກ່ຊຸມຊົນ.

ຕະຫຼາດສົດໂດຍທົ່ວໄປ ແມ່ນເປັນບໍລິເວນເຄິ່ງກາງແຈ້ງ ທີ່ປະກອບມີຮ້ານນ້ອຍຂາຍເຄື່ອງທີ່ຈັດເປັນແຖວ ແລະ ມີທາງຄົນຍ່າງທີ່ແຄບ. ນໍ້າຖືກນໍາໃຊ້ເພື່ອລ້າງຜະລິດຕະພັນສົດ, ສໍາລັບການກະກຽມອາຫານເຊັ່ນ: ການປາດຊີ້ນປາ ແລະ ການຕັດແຕ່ງຊີ້ນສັດຫຼັງຈາກຂ້າແລ້ວ ແລະ ສໍາລັບການເຮັດອະນາໄມເທິງໜ້າຮ້ານ ພື້ນຮ້ານ ແລະ ທາງລະບາຍນໍ້າ. ນໍ້າຈາກການລະລາຍຂອງນໍ້າກ້ອນ ທີ່ໃຊ້ແຊ່ແຂງອາຫານ ກໍກາຍເປັນສ່ວນໜຶ່ງຂອງສະພາບແວດລ້ອມຕະຫຼາດສົດ".

ໂດຍທົ່ວໄປ, ຕະຫຼາດສົດຖືກຈັດແບ່ງເປັນພາກສວນທີ່ຂາຍຜະລິດຕະພັນອາຫານປະເພດທີ່ຕ່າງກັນ. ຕົວຢ່າງ, ເຂດຂອງຕະຫຼາດທີ່ຂາຍປາຈະຖືກກໍານົດວ່າ ສົດ' ແລະ ເຂດທີ່ຂາຍເຄື່ອງເທດ ແລະ ເມັດພືດແຫ້ງຕ່າງໆຈະຖືກກໍານົດວ່າ 'ແຫ້ງ. ອາຫານທີ່ປຸງແຕ່ງສຸກແລ້ວ ກໍມັກຈະນໍາມາຂາຍສໍາລັບການບໍລິໂພກ ຢູ່ໃນຕະຫຼາດ ແລະ ຊື້ໄປກິນຢູ່ບ່ອນອື່ນ. ເນື່ອງຈາກສະຖານທີ່ມັກຈະມີລາຄາແພງ, ຮ້ານຂາຍເຄື່ອງອາດຈະຕັ້ງຢູ່ຕິດໆກັນ ໂດຍຫ່າງກັນພຽງເລັກນ້ອຍ ຫຼື ບໍ່ຫ່າງກັນເລີຍ.

ຕະຫຼາດສົດໂດຍທົ່ວໄປ ມັກຈະຖືກຄຸ້ມຄອງໂດຍໂຄງສ້າງການຈັດຕັ້ງຄຸ້ມຄອງ-ບໍລິຫານທີ່ສະຫຼັບສັບຊ້ອນ ໂດຍມີຫຼາຍໜ້າທີ່ຮັບຜິດຊອບທີ່ຊໍ້າຊ້ອນກັນ ລະຫວ່າງ ອົງການຄຸ້ມຄອງຕ່າງໆ ແລະ ອົງການບັງຄັບປະຕິບັດກົດໝາຍ. ຕະຫຼາດດັ່ງກ່າວຍັງມັກຈະໄດ້ຮັບການຈັດສັນຊັບພະຍາກອນທາງດ້ານການເງິນບໍ່ພຽງພໍ ສໍາລັບການບໍາລຸງຮັກສາ ແລະ ການປັບປຸງ. ສິ່ງດັ່ງກ່າວສາມາດເປັນປັດໄຈທີ່ຂັດຂວາງວິທີການແບບປະສົມປະສານທີ່ມີຄວາມຈໍາເປັນ ເພື່ອປັບປຸງມາດຕະຖານສຸຂະອະນາໄມ ແລະ ຄວາມປອດໄພຂອງອາຫານຢູ່ຕະຫຼາດດັ່ງກ່າວໃຫ້ດີຂຶ້ນ.

# ມາດຕະການທີ່ສະເໜີແນະ

ອົງການ WHO, OIE ແລະ UNEP ສະເໜີແນະຫຼາຍມາດຕະການ ທີ່ລັດຖະບານຂອງບັນດາປະເທດຕ້ອງດໍາເນີນໂດຍດ່ວນ ເພື່ອຫຼຸດຜ່ອນຄວາມສ່ຽງຂອງຄົນ ຈາກການຕິດເຊື້ອພະຍາດຕິດຕໍ່ຈາກສັດສູ່ຄົນໄດ້ ໃນຕ່ອງໂສ້ການຜະລິດ ແລະ ການຄ້າຂາຍອາຫານ ທີ່ກ່ຽວພັນກັບຕະຫຼາດສົດ.

### 1. ລະບຽບການສຸກເສີນ ເພື່ອໂຈະການຂາຍສັດປ່າທີ່ມີຊີວິດ ຢູ່ຕະຫຼາດສົດ

| |
|---|
| ອົງການ WHO, OIE ແລະ UNEP ຮຽກຮ້ອງມາຍັງຂະແໜງການທີ່ກ່ຽວຂ້ອງຂອງປະເທດ ໃຫ້ໂຈະການຄ້າຂາຍສັດປ່າຊະນິດພັນລ້ຽງລູກດ້ວຍນໍ້ານົມຍັງມີຊີວິດ ທີ່ຖືກລ່າມາຂາຍ ເພື່ອເປັນອາຫານ ຫຼື ເພື່ອນໍາມາລ້ຽງຂະຫຍາຍພັນ ແລະ ປິດພາກສ່ວນຂອງຕະຫຼາດ ທີ່ຂາຍສັດປ່າຊະນິດພັນລ້ຽງລູກດ້ວຍນໍ້ານົມຍັງມີຊີວິດ ທີ່ຖືກລ່າມາຂາຍ ເພື່ອເປັນມາດຕະການສຸກເສີນ, ເວັ້ນເສຍແຕ່ໄດ້ມີການນໍາໃຊ້ລະບຽບການທີ່ມີປະສິດທິພາບທີ່ສາມາດພິສູດໄດ້ ແລະ ມີການປະເມີນຄວາມສ່ຽງຢ່າງພຽງພໍແລ້ວ. |

ມັນມີຄວາມກ່ຽວພັນຢ່າງສະໜິດແໜ້ນ ລະຫວ່າງ ການຄ້າຂາຍສັດປ່າທີ່ມີຊີວິດ ແລະ ການອຸບັດຂຶ້ນຂອງພະຍາດຕິດຕໍ່ຈາກສັດສູ່ຄົນສາຍພັນໃໝ່ .[8] ໂຕສັດ ໂດຍສະເພາະແມ່ນສັດປ່າ ຖືກລາຍງານວ່າເປັນແຫຼ່ງກໍາເນີດຂອງເຊື້ອພະຍາດທີ່ກວມຫຼາຍກວ່າ 70% ຂອງການເກີດເຊື້ອພະຍາດ

ຕິດຕໍ່ໃນຄົນທັງໝົດ.[9,10,12] ຊຶ່ງໃນນັ້ນ, ຈຳນວນຫຼາຍແມ່ນໄດ້ເກີດມາຈາກເຊື້ອຈຸລະໂລກສາຍພັນໃໝ່. ຕະຫຼາດສົດ ຊຶ່ງເປັນບ່ອນທີ່ສັດມີຊີວິດ ຖືກຂັງ, ຖືກຂ້າ ແລະ ຖືກຕັດແຕ່ງເປັນຊິ້ນສ່ວນ ໄດ້ເຮັດໃຫ້ມີຄວາມສ່ຽງເປັນພິເສດ ໃນການເກີດການຕິດຕໍ່ເຊື້ອພະຍາດສູ່ຜູ້ຄ້າຂາຍໃນຕະຫຼາດ ແລະ ຜູ້ມາຊື້ເຄື່ອງຢູ່ຕະຫຼາດ. ເພື່ອຫຼຸດຜ່ອນຄວາມສ່ຽງດັ່ງກ່າວ, ມາດຕະການສຸກເສີນ ແລະ ຮີບດ່ວນ ສຳລັບອົງການຄຸ້ມຄອງ ແມ່ນການນຳໃຊ້ລະບຽບການ ເພື່ອປິດຕະຫຼາດດັ່ງກ່າວ ຫຼື ປິດສະເພາະພາກສ່ວນບ່ອນທີ່ສັດປ່າຊະນິດພັນລ້ຽງລູກດ້ວຍນ້ຳນົມທີ່ຍັງມີຊີວິດ ຖືກຈັບມາຂັງ ຫຼື ຂາຍ ເພື່ອແນໃສ່ຫຼຸດຜ່ອນຄວາມສ່ຽງຂອງການສົ່ງຕໍ່ເຊື້ອພະຍາດທີ່ສາມາດຕິດຕໍ່ຈາກສັດສູ່ຄົນ.

ມາດຕະການສຸກເສີນນີ້ຄວນເປັນມາດຕະການຊົ່ວຄາວ, ໃນຄະນະດຽວກັນໜ່ວຍງານຮັບຜິດຊອບທີ່ກ່ຽວຂ້ອງ ດຳເນີນການປະເມີນຄວາມສ່ຽງຢູ່ຕະຫຼາດແຕ່ລະແຫ່ງ ເພື່ອກຳນົດຈຸດທີ່ສຳຄັນ ແລະ ການປະຕິບັດ ທີ່ນຳໄປສູ່ການສົ່ງຕໍ່ເຊື້ອພະຍາດສັດຕິດຕໍ່ສູ່ຄົນໄດ້. ທຸກລະບຽບການໃໝ່ດັ່ງກ່າວຕ້ອງປະກອບມີການສະໜອງຂໍ້ມູນ ທີ່ສາມາດລະບຸແຫຼ່ງທີ່ມາຂອງສັດປ່າທີ່ຊັດເຈນ ເພື່ອຮັບປະກັນບໍ່ໃຫ້ສັດປ່າມີຊີວິດທີ່ຖືກລ່າ ຖືກນຳໄປໄວ້ໃນຟາມລ້ຽງສັດປ່າຢ່າງບໍ່ຖືກກົດໝາຍ, ຊຶ່ງມັນຈະເພີ່ມຄວາມສ່ຽງຂອງການສົ່ງຕໍ່ເຊື້ອພະຍາດຕິດຕໍ່ຈາກສັດສູ່ຄົນທີ່ແຜ່ກະຈາຍໃນປະຊາກອນສັດປ່າ.

ລະບຽບການສຸກເສີນດັ່ງກ່າວຕ້ອງມີຂອບເຂດເວລາ ໂດຍກຳນົດວັນທີ ແລະ ລະບຸເງື່ອນໄຂ ທີ່ລະບຽບການດັ່ງກ່າວຈະຖືກຍົກເລີຍ ຫຼື ຈະບໍ່ຖືກນຳໃຊ້ຕໍ່ໄປອີກ, ເວລາໃດທີ່ລະບຽບນັ້ນຄວນຈະຖືກປັບປຸງແກ້ໄຂ ຫຼື ການນຳໃຊ້ຂອງມັນຈະຖືກຕໍ່ເວລາອອກໄປຕື່ມອີກ. ເງື່ອນໄຂ ສຳລັບການປິດ ຫຼື ການເປີດຄືນຂອງຕະຫຼາດ ຫຼື ພາກສ່ວນໃດໜຶ່ງຂອງຕະຫຼາດ ຈະຕ້ອງລະບຸເຂົ້າໃນລະບຽບການດັ່ງກ່າວນີ້. ໜ່ວຍງານທີ່ກ່ຽວຂ້ອງຕ້ອງເຮັດວຽກຮ່ວມກັບຜູ້ຄຸ້ມຄອງຕະຫຼາດ ເພື່ອນຳໃຊ້ມາດຕະການຫຼຸດຜ່ອນຄວາມສ່ຽງທີ່ໄດ້ກຳນົດຂຶ້ນ. ຕະຫຼາດ ຫຼື ພາກສ່ວນໃດໜຶ່ງຂອງຕະຫຼາດຈະໄດ້ຮັບອະນຸຍາດໃຫ້ເປີດກິດຈະການຄືນໄດ້ ສະເພາະແຕ່ກໍລະນີທີ່ຕະຫຼາດນັ້ນປະຕິບັດໄດ້ຕາມມາດຕະຖານຄວາມປອດໄພດ້ານອາຫານ, ສຸຂະອະນາໄມ ແລະ ສິ່ງແວດລ້ອມທີ່ໄດ້ກຳນົດໄວ້ ແລະ ປະຕິບັດຢ່າງສອດຄ່ອງກັບລະບຽບການ.

ສິ່ງສຳຄັນແມ່ນຕ້ອງຮັບຮູ້ວ່າ ມັນບໍ່ມີຫຼັກຖານທີ່ສະແດງວ່າ ເຊື້ອພະຍາດ SARS-CoV-2 ໄດ້ຕິດຕໍ່ດ້ວຍການບໍລິໂພກຊີ້ນສັດປ່າ ທີ່ໄດ້ມີການປະຕິບັດຢ່າງຖືກຫຼັກອະນາໄມ ແລະ ປຸງແຕ່ງສຸກເປັນຢ່າງດີ.[2,11] ເຖິງຢ່າງໃດກໍ່ຕາມ, ມັນມີຄວາມສ່ຽງການຕິດຕໍ່ໃສ່ຄົນໂດຍກົງ ຈາກການສຳພັດກັບນ້ຳລາຍ, ເລືອດ, ປັດສະວະ, ນ້ຳມູກ, ອາຈົມ ຫຼື ທາດຄັບລັ່ງອື່ນໆຈາກຮ່າງກາຍຂອງສັດປ່າທີ່ຕິດເຊື້ອພະຍາດ. ນອກຈາກນັ້ນ, ກໍມີຄວາມສ່ຽງເພີ່ມເຕີມໃນການຕິດເຊື້ອພະຍາດ ຢູ່ເຂດທີ່ສັດຖືກຂັງໄວ້ໃນຕະຫຼາດ ຫຼື ຈາກການສຳພັດກັບສິ່ງຂອງ ຫຼື ພື້ນຜິວທີ່ຖືກປົນເປື້ອນເຊື້ອພະຍາດ SARS-CoV-2.[12,28,29]

ລະບຽບການໃໝ່ນີ້ຕ້ອງນຳໃຊ້ ໂດຍເອົາເປັນສ່ວນໜຶ່ງຂອງຍຸດທະສາດລວມ ເພື່ອສົ່ງເສີມການປ່ຽນແປງພຶດຕິກຳ ກ່ຽວກັບຕະຫຼາດຄ້າຂາຍສັດປ່າທີ່ມີຊີວິດ. ນະໂຍບາຍສົ່ງເສີມຈະຕ້ອງໄດ້ຮັບການພິຈາລະນາ ເພື່ອຊຸກຍູ້ການປະຕິບັດທີ່ມີຄວາມປອດໄພ ແລະ ການສື່ສານ ກ່ຽວກັບຄວາມສ່ຽງ ຈະມີບົດບາດສຳຄັນ ໃນການໄດ້ຮັບການຍອມຮັບຈາກບັນດາຜູ້ທີ່ມີສ່ວນກ່ຽວຂ້ອງຕົ້ນຕໍ. ມັນມີຄວາມສ່ຽງຢູ່ສະເໝີ ທີ່ການເກືອດຫ້າມຈະບໍ່ສາມາດຢັບຢັ້ງຜູ້ຄ້າຂາຍທັງໝົດຢູ່ໃນຕະຫຼາດໄດ້ ແລະ ການຄ້າຂາຍອາດຈະຍັງສືບຕໍ່ດຳເນີນແບບຜິດກົດໝາຍ. ສະນັ້ນ, ການລົງໂທດສຳລັບການລະເມີດລະບຽບການໃໝ່ ຕ້ອງໃຫ້ມີລັກສະນະລົງໂທດຢ່າງພຽງພໍ ເພື່ອຊຸກຍູ້ການປະຕິບັດໃຫ້ສອດຄ່ອງ ແລະ ຊັບພະຍາກອນສຳລັບການບັງຄັບໃຊ້ຈະຕ້ອງໄດ້ຮັບການພິຈາລະນາ. ມາດຕະການເພີ່ມເຕີມຈະຕ້ອງໄດ້ພິຈາລະນາ ເພື່ອສະໜັບສະໜູນ ຫຼື ຊຸກຍູ້ຜູ້ຄ້າຂາຍ ແລະ ຜູ້ອື່ນໆທີ່ມີສ່ວນກ່ຽວຂ້ອງໃນການຄ້າຂາຍສັດປ່າ ໃຫ້ຫັນປ່ຽນແນວທາງການທຳມາຫາກິນແບບໃໝ່.

## 2. ປັບປຸງມາດຕະຖານດ້ານສຸຂາພິບານ ແລະ ສຸຂະອະນາໄມ ໃນຕະຫຼາດສົດ ເພື່ອຫຼຸດຜ່ອນຄວາມສ່ຽງຂອງການຕິດຕໍ່ເຊື້ອພະຍາດສັດທີ່ສາມາດຕິດຕໍ່ສູ່ຄົນໄດ້ ແລະ ການຕິດຕໍ່ຂອງພະຍາດຈາກຄົນຫາຄົນ

ອົງການ WHO, OIE ແລະ UNEP ຮຽກຮ້ອງມາຍັງບັນດາອົງການທີ່ກ່ຽວຂ້ອງຂອງປະເທດ ໃຫ້ເສີມຂະຫຍາຍພື້ນຖານທາງດ້ານລະບຽບການ ເພື່ອປັບປຸງມາດຕະຖານດ້ານສຸຂາພິບານ ແລະ ສຸຂະອະນາໄມ ໃນຕະຫຼາດສົດ ແນໃສ່ຫຼຸດຜ່ອນຄວາມສ່ຽງການຕິດຕໍ່ພະຍາດສັດທີ່ສາມາດຕິດຕໍ່ສູ່ຄົນ. ໃນໄລຍະການລະບາດພະຍາດໃນປັດຈຸບັນ ຕ້ອງປະຕິບັດມາດຕະການເພີ່ມເຕີມ, ເຊັ່ນ: ການຄວບຄຸມຄວາມແອອັດຂອງຊຸມຊົນ ແລະ ການຮັກສາໄລຍະຫ່າງ, ການຈັດສະຖານທີ່ລ້າງມື ແລະ ສຸຂະອະນາໄມ ລວມທັງການສຶກສາອົບຮົມ ກ່ຽວກັບສຸຂະພາບລະບົບທາງເດີນຫາຍໃຈ ແລະ ການນຳໃຊ້ຜ້າອັດປາກ-ດັງຢູ່ໃນບໍລິເວນຕະຫຼາດ ເພື່ອຈຳກັດຄວາມອາດສາມາດເກີດການຕິດຕໍ່ພະຍາດຈາກຄົນສູ່ຄົນ.

ຕະຫຼາດສົດ ມັກຈະກ່ຽວພັນກັບການແຜ່ກະຈາຍຂອງພະຍາດຈາກສັດທີ່ສາມາດຕິດຕໍ່ສູ່ຄົນໄດ້ ແລະ ການລະບາດຂອງພະຍາດສຳຄັນທີ່ເກີດຈາກອາຫານ.[8] ສະພາບຂອງຕະຫຼາດສົດບາງແຫ່ງ ເຮັດໃຫ້ມີຄວາມສ່ຽງທັງໃນດ້ານຄວາມປອດໄພຂອງອາຫານ ແລະ ຄວາມສ່ຽງດ້ານສຸຂະພາບຂອງຜູ້ປະກອບອາຊີບໃນຕະຫຼາດ ຊຶ່ງສິ່ງເຫຼົ່ານີ້ສາມາດແກ້ໄຂໄດ້ ພຽງແຕ່ການປັບປຸງດ້ານສຸຂາພິບານ ແລະ ສຸຂະອະນາໄມໃຫ້ດີຂຶ້ນເທົ່ານັ້ນ; ຕົວຢ່າງຂອງການປັບປຸງ ທີ່ສາມາດຫຼຸດຜ່ອນການແຜ່ຂະຫຍາຍຂອງເຊື້ອພະຍາດ ແມ່ນໄດ້ຖືກໄດ້ດຳເນີນ ເພື່ອຫຼຸດຜ່ອນການແຜ່ຂະຫຍາຍຂອງພະຍາດໄຂ້ຫວັດສັດປີກ ແລະ ເຊື້ອພະຍາດສັດອື່ນໆທີ່ສາມາດຕິດຕໍ່ສູ່ຄົນຢູ່ປະເທດຈີນ, ອິນໂດເນເຊຍ, ໄທ ແລະ ປະເທດອື່ນໆ.[15,16] ໜ່ວຍງານກ່ຽວຂ້ອງທີ່ຮັບຜິດຊອບໃນການຄຸ້ມຄອງຕະຫຼາດສົດ ຕ້ອງຮຽນຮູ້ຈາກບົດຮຽນດັ່ງກ່າວ, ນຳໃຊ້ຫຼັກການກ່ຽວກັບຕະຫາດອາຫານທີ່ມີສຸຂານາໄມ (Healthy Food Markets)[8] ແລະ ສ້າງຍຸດທະສາດການປັບປຸງມາດຕະຖານສຸຂາພິບານ ແລະ ສຸຂະອະນາໄມແບບປະສົມປະສານ.

ຍຸດທະສາດດັ່ງກ່າວເຮັດໃຫ້ ການຄ້າຂາຍສັດທີ່ຍັງມີຊີວິດ ແລະ ການຂ້າຄົວສັດຢູ່ໃກ້ກັບມວນຊົນຄ່ອຍໆຢຸດເຊົາຢ່າງເປັນລຳດັບ ຫຼື ການຈັດໃຫ້ມີການແຍກກິດຈະກຳດັ່ງກ່າວອອກ ເພື່ອຫຼຸດຜ່ອນການຄວາມສ່ຽງການຕິດຕໍ່ເຊື້ອພະຍາດສັດທີ່ສາມາດຕິດຕໍ່ສູ່ຄົນ. ການຂ້າຄົວສັດ ແລະ ການຕັດແຕ່ງຊີ້ນສ່ວນ ຈະຕ້ອງປະຕິບັດຢູ່ສະຖານທີ່ອຳນວຍຄວາມສະດວກເໝາະສົມ ພາຍໃຕ້ການຄວບຄຸມຂອງຂະແໜງສັດຕະວະແພດ ທີ່ຕ້ອງດຳເນີນການກວດກາກ່ອນ ແລະ ຫຼັງການຂ້າສັດ[25]. ສິ່ງສຳຄັນທີ່ຈຳເປັນຕ້ອງລວມເຂົ້າໃນແຜນງານ ເພື່ອຍົກລະດັບມາດຕະຖານສຸຂາພິບານ ແລະ ສຸຂະອະນາໄມ ແມ່ນສິ່ງອຳນວຍຄວາມສະດວກດ້ານສຸຂາອະນາໄມ (ຫ້ອງນໍ້າ, ບ່ອນລ້າງມື), ການຄວບຄຸມເຊື້ອໂລກທີ່ຮ້າຍແຮງ, ການຄຸ້ມຄອງ ແລະ ກຳຈັດສິ່ງເສດເຫຼືອ (ຂີ້ເຫຍື້ອ ແລະ ສິ່ງເສດເຫຼືອປະເພດທາດແຫຼວ), ລະບົບການລະບາຍນໍ້າ ແລະ ການກຳຈັດນໍ້າເປື້ອນ. ພາກສ່ວນຂາຍອາຫານ ແລະ ກິດຈະກຳການຄ້າຂາຍອາຫານ ຄວນຍ້າຍໄປຢູ່ຮ້ານ ຫຼື ບ່ອນທີ່ມີການບົວລະບັດຮັກສາທີ່ດີ, ບ່ອນທີ່ສາມາດລ້າງທຳຄວາມສະອາດ ແລະ ຂ້າເຊື້ອໄດ້ງ່າຍ.

ອົງການ WHO ໄດ້ສ້າງຂໍ້ແນະນຳ ທີ່ລັດຖະບານຂອງບັນດາປະເທດສາມາດນຳໃຊ້ ເພື່ອປັບປຸງມາດຕະຖານສຸຂາພິບານ ແລະ ສຸຂະອະນາໄມ ໃນຕະຫຼາດສົດ[15,17] ແລະ ກຳລັງປັບປຸງຂໍ້ແນະນຳດັ່ງກ່າວ ຕາມເງື່ອນໄຂການລະບາດຂອງພະຍາດໂຄວິດ-19. ບັນດາມາດຕະການທີ່ສະໜີແນະໂດຍອົງການ WHO ເພື່ອສະກັດກັ້ນການແຜ່ຂະຫຍາຍຂອງພະຍາດຕິດຕໍ່ ຕ້ອງໄດ້ປະຕິບັດ ໃນເວລາທີ່ລູກຄ້າມາຕະຫຼາດສົດ[16] ປະກອບດ້ວຍການລ້າງມືດ້ວຍນໍ້າສະອາດ ໃສ່ສະບູຢ່າງເປັນປະຈຳ ຫຼັງຈາກຈັບບາຍສັດ ແລະ ຜະລິດຕະພັນ ສັດ, ແຕ່ດີທີ່ສຸດ ລູກຄ້າຄວນຫຼີກເວັ້ນການຈັບບາຍສັດ ແລະ ການຈັບບາຍຕາ, ດັງ ຫຼື ປາກຂອງຕົນເອງ. ມັນເປັນສິ່ງທ້າທາຍຫຼາຍໃນການຈັດຕັ້ງປະຕິບັດການຮັກສາໄລຍະຫ່າງທາງກາຍທີ່ສະເໜີແນະໂດຍອົງການ WHO ໃນບໍລິເວນຕະຫຼາດທີ່ມີຄົນຢ່າງໜ້າແໜ້ນ, ແຕ່ພາກສ່ວນຄຸ້ມຄອງຕະຫຼາດສາມາດອອກແບບໃຫ້ມີລະບົບທາງຍ່າງໃນທິດທາງດຽວ (one-way system) ສຳລັບລູກຄ້າ ເພື່ອເຄື່ອນຍ້າຍຊື້ສິນຄ້າລະຫວ່າງຮ້ານຂາຍເຄື່ອງ ແລະ ຮັກສາໄລຍະຫ່າງຢ່າງໜ້ອຍ 1 ແມັດ. ອົງການທີ່ກ່ຽວຂ້ອງທີ່ຮັບຜິດຊອບຄວາມປອດໄພດ້ານອາຫານ ຕ້ອງສ້າງຂະບວນການສື່ສານ ເພື່ອແຈ້ງໃຫ້ຜູ້ບໍລິໂພກຊາບ ກ່ຽວກັບຄວາມສ່ຽງທີ່ຕິດພັນກັບການຈັບບາຍ, ການຂ້າຄົວສັດ ແລະ ການຄ້າຂາຍສັດປ່າທີ່ມີຊີວິດທີ່ຖືກລ່າ ແລະ ເຫດຜົນຂອງຄວາມຈຳເປັນຕ້ອງມີລະບຽບການທີ່ເຄັ່ງຄັດ ສຳລັບການປະຕິບັດດັ່ງກ່າວ. ຂະບວນການສື່ສານດັ່ງກ່າວຍັງຈະເປັນໂອກາດ ເພື່ອສຶກສາອົບຮົມໃຫ້ແກ່ບຸກຄົນທີ່ມີການດຳລົງຊີວິດທີ່ເອື່ອຍອີງໃສ່ສັດປ່າ ແລະ ມວນຊົນທົ່ວໄປ ກ່ຽວກັບຜົນສະທ້ອນທີ່ບໍ່ດີ ຂອງການນຳໃຊ້ສັດປ່າແບບບໍ່ຍືນຍົງ ຕໍ່ຊີວະນາໆພັນ ແລະ ຄວາມສົມບູນຂອງລະບົບນິເວດ.

ອົງການກ່ຽວຂ້ອງທີ່ຮັບຜິດຊອບການຄຸ້ມຄອງຕະຫຼາດ ຕ້ອງຈັດຕັ້ງປະຕິບັດມາດຕະການຄວາມປອດໄພດ້ານຊີວະພາບໄລຍະຊົ່ວຄາວ ຢ່າງເໝາະສົມ ໃນໄລຍະການລະບາດພະຍາດເຊັ່ນ:

- ຈຳກັດຈຳນວນລູກຄ້າທີ່ເຂົ້າໄປໃນຕະຫຼາດສົດ ເພື່ອຫຼີກເວັ້ນການແອອັດເກີນໄປ
- ຮັບປະກັນການຄວບຄຸມການລຽນແຖວຕໍ່ຄິວ ດ້ວຍການໝາຍໃສ່ພື້ນ, ຢູ່ບ່ອນທີ່ສາມາດເຮັດໄດ້, ທີ່ສອດຄ່ອງກັບຂໍ້ແນະນຳການຮັກສາໄລຍະຫ່າງ ຢູ່ທາງເຂົ້າໄປຕະຫຼາດອາຫານສົດ
- ຈັດສະໜອງເຈວລ້າງມື, ສະເປຂ້າເຊື້ອໂລກ ແລະ ເຈ້ຍອະນາໄມຢູ່ຈຸດທາງເຂົ້າຂອງຕະຫຼາດ
- ຮັບປະກັນການປະຕິບັດການນຳໃຊ້ຜ້າອັດປາກ-ດັງຢ່າງຖືກຕ້ອງ ຕາມລະບຽບການ ຫຼື ຂໍ້ແນະນຳຂອງປະເທດ ຫຼື ທ້ອງຖິ່ນ
- ນຳໃຊ້ການໝາຍໃສ່ພື້ນຢູ່ໃນຕະຫຼາດ ເພື່ອສ້າງຄວາມສະດວກແກ່ການປະຕິບັດການຮັກສາໄລຍະຫ່າງ
- ຕິດຕັ້ງແນວກັ້ນທີ່ເຮັດດ້ວຍແຜ່ນແກ້ວໂພລີເມີ ເພື່ອຫຼີກເວັ້ນການສຳພັດໂດຍກົງຂອງຜູ້ບໍລິໂພກ ກັບສັດມີຊີວິດ
- ສົ່ງເສີມການນຳໃຊ້ວິທີການຊຳລະເງິນແບບບໍ່ມີການສຳພັດກັນ
- ຮັບປະກັນການທຳຄວາມສະອາດ ແລະ ການອະນາໄມຕະຫຼາດປະຈຳວັນ ລວມທັງການຄຸ້ມຄອງສິ່ງເສດເຫຼືອ ໄດ້ປະຕິບັດຢ່າງຖືກຕ້ອງຕາມມາດຕະຖານທີ່ເຂັ້ມງວດ.

### 3. ລະບຽບການ ດ້ານອາຫານ ເພື່ອຄວບຄຸມການລ້ຽງສັດປ່າໃນຟາມລ້ຽງສັດ ແລະ ການຂາຍສັດປ່າຢູ່ຕະຫຼາດ ສຳລັບການບໍລິໂພກຂອງຄົນ

> ອົງການ WHO, OIE ແລະ UNEP ຮຽກຮ້ອງມາຍັງບັນດາອົງການທີ່ກ່ຽວຂ້ອງຂອງປະເທດ ໃຫ້ດຳເນີນການປະເມີນຄວາມສ່ຽງ ເພື່ອສະໜອງພື້ນຖານຫຼັກຖານແກ່ການສ້າງລະບຽບການ ເພື່ອຄວບຄຸມຄວາມສ່ຽງຂອງການຕິດຕໍ່ເຊື້ອຈຸລິນຊີທີ່ສາມາດຕິດຕໍ່ຈາກສັດສູ່ຄົນໄດ້ ຈາກສັດປ່າທີ່ລ້ຽງໃນຟາມລ້ຽງສັດ ແລະ ສັດປ່າທີ່ລ່າຈາກປ່າ ເພື່ອນຳໄປລ້ຽງຂະຫຍາຍພັນ ຫຼື ສຳລັບການບໍລິໂພກຂອງຄົນ. ລະບຽບການດັ່ງກ່າວຕ້ອງກຳນົດສິ່ງຊີ້ບອກຂອງສັດປ່າທີ່ລ້ຽງໃນຟາມລ້ຽງສັດ ເພື່ອຮັບປະກັນໃຫ້ມັນສາມາດຖືກຈຳແນກໄດ້ ຈາກສັດປ່າທີ່ຖືກລ່າຈາກປ່າ ແລະ ຕ້ອງປະກອບດ້ວຍມາດຕະການຄວາມປອດໄພດ້ານຊີວະພາບຢ່າງເຂັ້ມງວດ.

ການລ້ຽງສັດປ່າໃນຟາມລ້ຽງສັດ ແມ່ນການປະຕິບັດທີ່ມີລັກສະນະແຜ່ຫຼາຍ ຢູ່ຫຼາຍບ່ອນໃນໂລກ.[13] ລະບຽບການ ດ້ານອາຫານ ຂອງປະເທດຕ້ອງປະກອບດ້ວຍມາດຕະການຄວາມປອດໄພດ້ານຊີວະພາບ ໃນຟາມລ້ຽງສັດຢ່າງເຂັ້ມງວດ ເພື່ອສະກັດກັ້ນການເກີດ ຫຼື ການແຜ່ລະບາດຂອງພະຍາດສັດທີ່ສາມາດຕິດຕໍ່ສູ່ຄົນໄດ້. ສຳລັບອາຫານທຸກຢ່າງທີ່ມາຈາກສັດ ຂໍ້ກຳນົດສະເພາະດ້ານສຸຂະອະນາໄມ ສຳລັບຂະບວນການຜະລິດ, ການປຸງແຕ່ງ, ການຄ້າຂາຍອາຫານທີ່ມາຈາກສັດ ຕ້ອງໄດ້ລະບຸເຂົ້າໃນທຸກລະບຽບການ ກ່ຽວກັບອາຫານຂອງປະເທດ. ລະບຽບການດ້ານອາຫານດັ່ງກ່າວ ຕ້ອງລວມເອົາຂໍ້ກຳນົດ ສຳລັບການນຳໃຊ້ ລະບົບການອີງໃສ່ຄວາມສ່ຽງ ເພື່ອປະເມີນ ແລະ ຄວບຄຸມຄວາມອັນຕະລາຍຂອງເຊື້ອຈຸລິນຊີໃນທຸກຕ່ອງໂສ້ອາຫານ ແນໃສ່ເສີມຂະຫຍາຍຄວາມປອດໄພດ້ານອາຫານ. ອົງການທີ່ກ່ຽວຂ້ອງດ້ານການຄວບຄຸມວຽກງານສັດຕະວະແພດ ທີ່ຮັບຜິດຊອບການຄຸ້ມຄອງກວດກາ ແລະ ຈັດຕັ້ງປະຕິບັດລະບຽບການທີ່ພົວພັນກັບອາຫານຈາກສັດ ແລະ ເຊື້ອພະຍາດທີ່ສາມາດຕິດຕໍ່ຈາກສັດສູ່ຄົນ ຕ້ອງໄດ້ດຳເນີນການກວດກາຟາມລ້ຽງສັດ ແລະ ບ່ອນທີ່ສັດດັ່ງກ່າວຖືກປຸງແຕ່ງເປັນອາຫານ, ຈຳໜ່າຍ ແລະ ຄ້າຂາຍເພື່ອຮັບປະກັນການປະຕິບັດຢ່າງສອດຄ່ອງກັບລະບຽບການ. ການປັບປຸງອື່ນໆຫຼາຍຢ່າງອາດຈະມີຄວາມຈຳເປັນ, ອັນທຳອິດ ລະບຽບການສະເພາະຂອງປະເທດ ດ້ານສຸຂະພາບ ແລະ ສະຫວັດດີການຂອງສັດ ຕ້ອງຖືກຈັດຕັ້ງປະຕິບັດສຳລັບຟາມລ້ຽງສັດ. ອັນທີສອງ, ການກວດກາກ່ອນ ແລະ ຫຼັງການຂ້າ ຕ້ອງປະຕິບັດໃນເວລາຂ້າສັດ. ອັນທີສາມ, ເງື່ອນໄຂດ້ານສຸຂາພິບານ ແລະ ສຸຂະອະນາໄມ ຕ້ອງປະຕິບັດໃນທຸກຂັ້ນຕອນຂອງການຜະລິດ, ການປຸງແຕ່ງ ແລະ ການຄ້າຂາຍ. ອັນສຸດທ້າຍ, ຂໍ້ກຳນົດ ກ່ຽວກັບສິ່ງຊີ້ບອກເພື່ອຈຳແນກລະຫວ່າງສັດປ່າລ້ຽງ ແລະ ທຳມະຊາດ ແມ່ນມີຄວາມຈຳເປັນ.

ສັດປ່າທີ່ລ້ຽງໃນຟາມລ້ຽງສັດ ແມ່ນມີຄວາມອັນຕະລາຍທາງດ້ານອາຊີບ ສຳລັບຜູ້ອອກແຮງງານທຸກຄົນໃນຕ່ອງໂສ້ອາຫານດັ່ງກ່າວ[14] ເພາະວ່າສັດສາມາດເປັນແຫຼ່ງຖືເຊື້ອພະຍາດທີ່ສາມາດຕິດຕໍ່ຈາກສັດສູ່ຄົນ. ການກວດກາສຸຂະພາບຂອງສັດເປັນວິທີທາງທີ່ມີປະໂຫຍດ ເພື່ອກຳນົດອາການຕິດພະຍາດທີ່ເກີດຈາກເຊື້ອຈຸລິນຊີດັ່ງກ່າວ ແລະ ເພື່ອເອົາສັດທີ່ສະແດງອາການດັ່ງກ່າວອອກຈາກຕ່ອງໂສ້ອາຫານ. ເຖິງຢ່າງໃດກໍຕາມ, ບໍ່ແມ່ນໝົດທຸກເຊື້ອພະຍາດສັດທີ່ສາມາດຕິດຕໍ່ສູ່ຄົນ ຈະສະແດງອາການພາຍນອກໃຫ້ເຫັນພະຍາດໃນສັດທີ່ເປັນພາຫະນະນຳເຊື້ອພະຍາດ. ຈຸລະຊີວະວິທະຍາອັນຕະລາຍຈຳນວນຫຼາຍ ໂດຍສະເພາະພະຍາດທີ່ສາມາດມີຢູ່ໃນກະເພາະອາຫານ ແລະ ລຳໄສ້ ອາດຈະບໍ່ເຮັດໃຫ້ເກີດພະຍາດແກ່ສັດ; ແຕ່ເຊື້ອພະຍາດທີ່ມີຢູ່ໃນກະເພາະອາຫານ ແລະ ລຳໄສ້ຂອງສັດ ສາມາດປົນເປື້ອນຜະລິດຕະພັນອາຫານ ແລະ ສະພາບສະແວດລ້ອມອ້ອມຮອບ. ສະນັ້ນ, ການເຝົ້າລະວັງຢ່າງເຂັ້ມງວດ ການລ້ຽງສັດໃນຟາມລ້ຽງສັດ ແລະ ວິທີການລ້ຽງສັດ ແລະ ການປະຕິບັດການອະນາໄມທີ່ດີໃນການຂ້າສັດ, ການຕັດແຕ່ງຊີ້ນສ່ວນ, ການຈັບບາຍ ແລະ ການກະກຽມປຸງແຕ່ງ ທັງສັດລ້ຽງ ແລະ ສັດປ່າແມ່ນສິ່ງທີ່ມີຄວາມຈຳເປັນ.

ຟາມຂະຫຍາຍພັນສັດທີ່ ຕ້ອງຂຶ້ນທະບຽນ, ໄດ້ຮັບການອະນຸມັດ ແລະ ກວດກາ ກ່ຽວກັບມາດຕະຖານດ້ານສຸຂະພາບ ແລະ ສະຫວັດດີການຂອງສັດ ໂດຍອົງການທີ່ມີສິດອຳນາດທີ່ກ່ຽວຂ້ອງ[iv]. ໃນກໍລະນີທີ່ສັດປ່າທີ່ລ້ຽງໃນຟາມລ້ຽງສັດ ທີ່ຍັງມີຊີວິດ ຖືກນຳໄປຂາຍຢູ່ໃນຕະຫຼາດສົດ, ບັນດາລະບຽບການດ້ານອາຫານ, ມາດຕະຖານດ້ານສຸຂາພິບານ ແລະ ສຸຂະອະນາໄມ ຕ້ອງໄດ້ສ້າງຂຶ້ນ ແລະ ບັງຄັບໃຫ້ປະຕິບັດ ສຳລັບຕະຫຼາດດັ່ງກ່າວ. ລະບຽບການດ້ານອາຫານນີ້ ຕ້ອງແນໃສ່ການບໍ່ໃຫ້ມວນຊົນເຂົ້າເຖິງເຂດທີ່ເປັນບ່ອນຂ້າສັດ ແລະ ຕັດແຕ່ງຊີ້ນສ່ວນ. ຂັ້ນຕອນການຂ້າສັດຕ້ອງຖືກຄວບຄຸມກວດກາໂດຍຜູ້ກວດກາສັດຕະວະແພດ ແລະ ຕ້ອງດຳເນີນຢູ່ເຂດໃດໜຶ່ງຕ່າງຫາກທີ່ມີການອະນາໄມ ແລະ ມີການຈຳກັດການເຂົ້າເຖິງ. ການແຍກຢູ່ບ່ອນຕ່າງຫາກ ແລະ ການກວດກາ ມີຄວາມຈຳເປັນ ເພາະວ່າສະຖານທີ່ຂັງສັດ, ຂ້າສັດ, ຕັດແຕ່ງຊີ້ນສ່ວນສັດ ສາມາດປົນເປື້ອນກັບອາຈົມ ແລະ ສິ່ງທີ່ຂັບຖ່າຍອື່ນໆ ທີ່ເຮັດໃຫ້ມີຄວາມສ່ຽງຂອງການຕິດຕໍ່ເຊື້ອພະຍາດໃສ່ຜູ້ຂ້າຂາຍ ແລະ ລູກຄ້າໃນຕະຫຼາດ.

### 4. ຈັດການຝຶກອົບຮົມແກ່ຜູ້ກວດກາອາຫານ ແລະ ຜູ້ກວດກາສັດຕະວະແພດ ກ່ຽວກັບການປະຕິບັດທີ່ສອດຄ່ອງ ແລະ ການບັງຄັບປະຕິບັດລະບຽບການໃໝ່

ອົງການ WHO, OIE ແລະ UNEP ຮຽກຮ້ອງມາຍັງບັນດາອົງການທີ່ກ່ຽວຂ້ອງຂອງປະເທດ ໃຫ້ຮັບປະກັນໃຫ້ຜູ້ກວດກາອາຫານໄດ້ຮັບການຝຶກອົບຮົມຢ່າງພຽງພໍ ເພື່ອຮັບປະກັນໃຫ້ທຸລະກິດດໍາເນີນຢ່າງສອດຄ່ອງກັບລະບຽບການ ເພື່ອປົກປ້ອງສຸຂະພາບຂອງຜູ້ຊົມໃຊ້ ແລະ ໃຫ້ເປັນຜູ້ທີ່ຮັບຜິດຊອບ. ນອກຈາກນັ້ນ, ອົງການທີ່ກ່ຽວຂ້ອງທີ່ຮັບຜິດຊອບການຄຸ້ມຄອງຕະຫຼາດສົດ ຕ້ອງໄດ້ມີຄວາມຮັບຮູ້ ແລະ ເຂົ້າໃຈຢ່າງພຽງພໍ ເພື່ອຮັບປະກັນໃຫ້ລະບຽບການທີ່ເລັ່ງໃສ່ການຜະລິດ, ການປຸງແຕ່ງ ແລະ ການຄ້າຂາຍສັດເພື່ອເປັນອາຫານ ໄດ້ຮັບການບັງຄັບປະຕິບັດຢ່າງສອດຄ່ອງ.

ການກວດກາອາຫານແມ່ນອົງປະກອບທີ່ສໍາຄັນ ຂອງລະບົບການຄວບຄຸມຄວາມປອດໄພດ້ານອາຫານຂອງປະເທດ ເນື່ອງຈາກ ມັນເລັ່ງໃສ່ຮັບປະກັນໃຫ້ອາຫານທີ່ຂາຍ ໄດ້ປະຕິບັດຢ່າງຖືກຕ້ອງຕາມເງື່ອນໄຂດ້ານຄວາມປອດໄພທີ່ກໍານົດໄວ້ໃນນິຕິກໍາກ່ຽວກັບອາຫານ. ເພື່ອບັນລຸເປົ້າໝາຍດັ່ງກ່າວ, ຜູ້ກວດກາອາຫານ ແລະ ຜູ້ກວດກາສັດຕະວະແພດ ຕ້ອງໄດ້ຮັບການຝຶກອົບຮົມ, ມີຄຸນວຸດທິ ແລະ ບໍ່ມີຂໍ້ຂັດແຍ່ງທາງດ້ານຜົນປະໂຫຍດ.[18] ພະນັກງານຂອງອົງການທີ່ກ່ຽວຂ້ອງ ທີ່ປະຕິບັດວຽກງານກວດກາຟາມລ້ຽງສັດປ່າ ຫຼື ຕະຫຼາດທີ່ຂາຍສັດປ່າຈາກຟາມລ້ຽງສັດ ຕ້ອງໄດ້ຮັບການຝຶກອົບຮົມຢ່າງພຽງພໍ ເພື່ອໃຫ້ພວກເຂົາສາມາດປະຕິບັດໜ້າທີ່ຢ່າງມີປະສິດທິພາບ ແລະ ຢ່າງເປັນເອກະລາດ ແລະ ດໍາເນີນການກວດກາຄວາມປອດໄພຂອງອາຫານຢ່າງຖືກຕ້ອງ. ອົງການທີ່ກ່ຽວຂ້ອງຕ້ອງສ້າງແຜນການຝຶກອົບຮົມປະຈໍາປີ ແລະ ຮັກສາຂໍ້ມູນການຝຶກອົບຮົມຂອງຜູ້ກວດກາອາຫານແຕ່ລະຄົນ ແລະ ຮັບປະກັນໃຫ້ຂໍ້ມູນດັ່ງກ່າວໄດ້ຮັບການປັບປຸງໃຫ້ສອດຄ່ອງກັບສະພາບປັດຈຸບັນ. ການດໍາເນີນການບັງຄັບປະຕິບັດຕ້ອງບັນທຶກໄວ້. ຜູ້ກວດກາອາຫານ ແລະ ຜູ້ກວດກາສັດຕະວະແພດຕ້ອງເຮັດວຽກຢ່າງໃກ້ຊິດ ຮ່ວມກັບເຈົ້າໜ້າທີ່ສັດປ່າພາຍໃຕ້ຂໍ້ຕົກລົງທີ່ຈະແຈ້ງ ເພື່ອກໍານົດຊະນິດພັນສັດປ່າທີ່ຄ້າຂາຍຢ່າງຜິດກົດໝາຍ ແລະ ເພື່ອບັງຄັບປະຕິບັດລະບຽບການທີ່ກ່ຽວຂ້ອງຂອງປະເທດ ແລະ ຂອງສາກົນ.

ອົງການກ່ຽວຂ້ອງທີ່ຮັບຜິດຊອບການຄຸ້ມຄອງຕະຫຼາດສົດ ກໍຕ້ອງມີຄວາມຮັບຮູ້ເຂົ້າໃຈຢ່າງພຽງພໍ ເພື່ອຮັບປະກັນໃຫ້ລະບຽບການທີ່ເລັ່ງໃສ່ການຜະລິດ, ການປຸງແຕ່ງ ແລະ ການຄ້າຂາຍສັດເພື່ອເປັນອາຫານໄດ້ຖືກບັງຄັບປະຕິບັດຢ່າງສອດຄ່ອງ.

### 5. ສ້າງຄວາມເຂັ້ມແຂງໃຫ້ແກ່ລະບົບການເຝົ້າລະວັງເຊື້ອພະຍາດທີ່ສາມາດຕິດຕໍ່ຈາກສັດສູ່ຄົນ

ອົງການ WHO, OIE ແລະ UNEP ຮຽກຮ້ອງມາຍັງບັນດາອົງການທີ່ກ່ຽວຂ້ອງຂອງປະເທດ ໃຫ້ສ້າງຄວາມເຂັ້ມແຂງແກ່ລະບົບການເຝົ້າລະວັງສຸຂະພາບສັດ ສໍາລັບເຊື້ອພະຍາດທີ່ສາມາດຕິດຕໍ່ຈາກສັດສູ່ຄົນ ໂດຍກວມເອົາທັງສັດລ້ຽງ ແລະ ສັດປ່າ. ອັນນີ້ຈະເຮັດໃຫ້ມີລະບົບເຕືອນໄພລ່ວງໜ້າ ກ່ຽວກັບການອຸບັດຂຶ້ນຂອງເຊື້ອພະຍາດ ແລະ ສະໜອງຫຼັກຖານພື້ນຖານ ສໍາລັບການພັດທະນາລະບົບຄວບຄຸມ ເພື່ອສະກັດກັ້ນຄວາມສ່ຽງຕໍ່ສຸຂະພາບຂອງຄົນ ໂດຍຕິດພັນກັບລະບົບການເຝົ້າລະວັງສຸຂະພາບຂອງສາທາລະນະຊົນ.

[iv] ສົນທິສັນຍາ ວ່າດ້ວຍການຄ້າຊະນິດພັນສັດປ່າ ແລະ ພືດປ່າທີ່ໃກ້ຈະສູນພັນ ລະຫວ່າງຊາດ (CITES) ກໍານົດໃຫ້ກິດຈະການລ້ຽງສັດຊະນິດພັນທີ່ນອນຢູ່ໃນບັນຊີ I ເພື່ອຈຸດປະສົງທາງດ້ານການຄ້າ ຕ້ອງຈົດທະບຽນນໍາກອງເລຂາ ສົນທິສັນຍາ ໄຊເຕັດ ເພື່ອເຮັດໃຫ້ຊະນິດພັນສາມາດຄ້າຂາຍລະຫວ່າງຊາດ.
(.https://www.cites.org/eng/resources/registers.php)

ການເຝົ້າລະວັງພະຍາດ ແມ່ນກິດຈະກໍາທີ່ອີງໃສ່ຂໍ້ມູນຂ່າວສານ ທີ່ກ່ຽວຂ້ອງກັບການເກັບກໍາ, ວິເຄາະ ແລະ ຕີຄວາມໝາຍຂອງຂໍ້ມູນ ສໍາລັບການດໍາເນີນການກ່ຽວກັບພະຍາດໃນສັດ ແລະ ຄົນ. ໃນໄລຍະການລະບາດພະຍາດໃນປັດຈຸບັນ ແລະ ການຄຸ້ມຄອງເຫດການເກີດພະຍາດຕິດຕໍ່ຈາກສັດສູ່ຄົນອື່ນໆ, ມັນມີຄວາມສໍາຄັນທີ່ສຸດ ທີ່ທຸກໆອົງການຂອງປະເທດທີ່ຮັບຜິດຊອບການເຝົ້າລະວັງ ຕ້ອງຮ່ວມມືກັນເພື່ອຮັບປະກັນການສື່ສານຄວາມສ່ຽງ ແລະ ການຄວບຄຸມຄວາມສ່ຽງ ທີ່ກົມກຽວ ແລະ ແທດເໝາະ.[19] ໃນປັດຈຸບັນ, ການເຝົ້າລະວັງສຸຂະພາບຂອງຄົນ ແມ່ນຄວາມຮັບຜິດຊອບຂອງຂະແໜງສາທາລະນະສຸກ ແລະ ການເຝົ້າລະວັງພະຍາດໃນສັດລ້ຽງ ແມ່ນຄວາມຮັບຜິດ ຊອບຂອງຂະແໜງສັດຕະວະແພດ.

ການເຝົ້າລະວັງພະຍາດໃນສັດປ່າ, ໃນກໍລະນີທີ່ມັນມີເຫດການ, ຕາມປົກກະຕິແມ່ນຄວາມຮັບຜິດຊອບຂອງຂະແໜງສັດຕະວະແພດ ແລະ ຂະແໜງປ່າໄມ້, ຂະແໜງສິ່ງແວດລ້ອມ ຫຼື ຂະແໜງສັດປ່າ. ສິ່ງສໍາຄັນແມ່ນ ລະບົບການເຝົ້າລະວັງສັດລ້ຽງ ແລະ ສັດປ່າຂອງປະເທດ ສໍາລັບເຊື້ອພະຍາດທີ່ສາມາດຕິດຕໍ່ຈາກສັດສູ່ຄົນ, ຊຶ່ງໃຫ້ການເຕືອນໄພລ່ວງໜ້າ ກ່ຽວກັບການອຸບັດຂຶ້ນຂອງເຊື້ອພະຍາດ, ຕ້ອງມີການປະສານງານຢ່າງໃກ້ຊິດ ກັບການເຝົ້າລະວັງຂອງຂະແໜງສາທາລະນະສຸກ ເພື່ອສະໜອງໂອກາດໃນການຄວບຄຸມເຊື້ອພະຍາດດັ່ງກ່າວ ກ່ອນທີ່ມັນຈະສາມາດສົ່ງຜົນກະທົບຕໍ່ສຸຂະພາບຂອງຄົນ.[20] ລະບົບການເຝົ້າລະວັງພະຍາດໃນສັດປ່າ ຍັງບໍ່ທັນມີລັກສະນະປົກກະຕິ, ແຕ່ມັນຕ້ອງການໃຫ້ມີການພັດທະນາຢ່າງຮີບດ່ວນ ແລະ ມີການປະສານງານກັບແຜນງານເຝົ້າລະວັງສຸຂະພາບຂອງສັດລ້ຽງ.

ໜ່ວຍງານວິຊາການ ຫຼື ຄະນະກຳມະການ ຕ້ອງໄດ້ຮັບການສ້າງຕັ້ງຂຶ້ນໃນລະດັບຊາດ ເພື່ອແລກປ່ຽນຂໍ້ມູນຂ່າວສານ ກ່ຽວກັບລະບົບການເຝົ້າລະວັງພະຍາດໃນຄົນ, ສັດລ້ຽງ ແລະ ສັດປ່າ. ຄະນະກຳມະການດັ່ງກ່າວຕ້ອງກຳນົດວິທີການປະຕິບັດຕົວຈິງ ເພື່ອປະສານງານການເຝົ້າລະວັງພະຍາດຄົນ ແລະ ສັດຢູ່ໃນລະດັບຊາດ ລວມທັງການຄຸ້ມຄອງຂໍ້ມູນ, ເຄືອຂ່າຍການສື່ສານ ແລະ ເຄືອຂ່າຍຫ້ອງວິໄຈ ໃນລະດັບຊາດ ແລະ ຂົງເຂດ ໂດຍນຳໃຊ້ວິທີການສຸຂະພາບໜຶ່ງດຽວ (One Health approach).

## 6. ຂະບວນການເຜີຍແຜ່ຂໍ້ມູນຂ່າວສານ ກ່ຽວກັບຄວາມປອດໄພດ້ານອາຫານ ໃຫ້ແກ່ຜູ້ຄ້າຂາຍໃນຕະຫຼາດ, ເຈົ້າຂອງຮ້ານຂາຍເຄື່ອງ ແລະ ຜູ້ບໍລິໂພກ

ອົງການ WHO, OIE ແລະ UNEP ຮຽກຮ້ອງມາຍັງບັນດາອົງການທີ່ກ່ຽວຂ້ອງຂອງປະເທດ ໃຫ້ພັດທະນາ ແລະ ຈັດຕັ້ງປະຕິບັດຂະບວນການເຜີຍແຜ່ຂໍ້ມູນຂ່າວສານ ກ່ຽວກັບຄວາມປອດໄພດ້ານອາຫານ ສຳລັບຜູ້ຄ້າຂາຍໃນຕະຫຼາດ, ເຈົ້າຂອງຮ້ານຂາຍເຄື່ອງ, ຜູ້ບໍລິໂພກ ແລະ ມວນຊົນທົ່ວໄປຢ່າງກວ້າງຂວາງ. ຂະບວນການດັ່ງກ່າວຕ້ອງສື່ສານຫຼັກການ ກ່ຽວກັບຄວາມປອດໄພດ້ານອາຫານ ແລະ ຄວາມສ່ຽງຂອງການເກີດເຊື້ອພະຍາດຕິດຕໍ່ຈາກສັດສູ່ຄົນ ທີ່ເກີດມາຈາກການສຳພັດ ລະຫວ່າງ ຄົນ ແລະ ສັດ ແລະ ຄວາມສ່ຽງທີ່ຕິດພັນກັບການບໍລິໂພກ ແລະ ການຄ້າຂາຍສັດປ່າ. ນອກຈາກນັ້ນ, ຂະບວນການນີ້ຍັງຕ້ອງເຜີຍແຜ່ຂໍ້ມູນຂ່າວສານ ໃຫ້ແກ່ບັນດາຜູ້ທີ່ມີສ່ວນກ່ຽວຂ້ອງທັງໝົດ ກ່ຽວກັບຄວາມສຳຄັນຂອງຊີວະນາໆພັນ ແລະ ຄວາມຕ້ອງການນຳໃຊ້ສັດປ່າ ເພື່ອໃຫ້ຖືກຕ້ອງຕາມກົດໝາຍ, ມີຄວາມຍືນຍົງ, ຄວາມປອດໄພ ແລະ ຄວາມຮັບຜິດຊອບ.

ອົງການ WHO ລວມທັງອົງການ FAO ແລະ OIE ໄດ້ມີປະສົບປະການຫຼາຍສົມຄວນ ໃນຊຸມປີທີ່ຜ່ານມາ ໂດຍຜ່ານຄວາມພະຍາຍາມໃນການຮ່ວມມືກັບບັນດາປະເທດ ເພື່ອປັບປຸງມາດຕະຖານສຸຂາພິບານ ແລະ ສຸຂະອະນາໄມ ໃນຕະຫຼາດສົດທີ່ຂາຍສັດມີຊີວິດ.[17,21] ໃນໄລຍະການລະບາດໄຂ້ຫວັດສັດປີກ (avian influenza) ແລະ ພະຍາດຊາສ (SARS) ຢູ່ປະເທດຈີນ, ການປະຕິບັດທີ່ມີຄວາມສ່ຽງສູງໃນບໍລິເວນຕະຫຼາດໄດ້ຖືກກຳນົດ ແລະ ການດຳເນີນການແກ້ໄຂໄດ້ຖືກຈັດຕັ້ງປະຕິບັດ.[21] ແຜນງານສື່ສານ ແລະ ການຝຶກອົບຮົມ ທີ່ແນໃສ່ຫຼຸດຜ່ອນຄວາມສ່ຽງຂອງການຕິດຕໍ່ເຊື້ອພະຍາດໃນຕະຫຼາດສົດ ດ້ວຍຄ່າໃຊ້ຈ່າຍຕໍ່າ ແລະ ມີຄວາມຍືນຍົງ ແລະ ປັບໃຫ້ສອດຄ່ອງກັບສະພາບເງື່ອນໄຂຂອງທ້ອງຖິ່ນ ໄດ້ຖືກສ້າງຂຶ້ນ.[22] ເຖິງຢ່າງໃດກໍຕາມ, ການດຳເນີນການແກ້ໄຂດັ່ງກ່າວຕ້ອງການໃຫ້ມີການຂະຫຍາຍກວ້າງອອກ.

ເພື່ອຈັດຕັ້ງປະຕິບັດຂະບວນການເຜີຍແຜ່ຂໍ້ມູນຂ່າວສານ ທີ່ແນໃສ່ຫຼຸດຜ່ອນຄວາມສ່ຽງຂອງການຕິດຕໍ່ເຊື້ອພະຍາດ SARS-CoV-2 ແລະ ພະຍາດທີ່ສາມາດຕິດຕໍ່ຈາກສັດສູ່ຄົນ ທີ່ເກີດຂຶ້ນໃນບໍລິເວນຕະຫຼາດສົດ ໃຫ້ມີຜົນສຳເລັດ, ບາດກ້າວທຳອິດແມ່ນ ການປະເມີນຄວາມຮັບຮູ້ຂອງຜູ້ເຮັດວຽກໃນຕະຫຼາດ ກ່ຽວກັບບັນຫາດ້ານສຸຂະອະນາໄມອາຫານ, ຄວາມປອດໄພດ້ານອາຫານ, ພະຍາດໂຄວິດ-19 ແລະ ການຕິດຕໍ່ຂອງມັນ ແລະ ພະຍາດທີ່ສາມາດຕິດຕໍ່ຈາກສັດສູ່ຄົນທີ່ເກີດຂຶ້ນ ແລະ ປະເມີນພຶດຕິກຳຂອງພວກເຂົາໃນປັດຈຸບັນ ກ່ຽວກັບສິ່ງດັ່ງກ່າວ. ການສຳຫຼວດ ແລະ ການສຶກສາ ກ່ຽວກັບຄວາມຮູ້, ທັດສະນະຄະຕິ, ການປະຕິບັດ (knowledge, attitude, practice, KAP) ມີຄວາມຈຳເປັນ ເພື່ອເກັບກຳ ແລະ ປະເມີນຂໍ້ມູນທີ່ກ່ຽວຂ້ອງ ເພື່ອນຳໃຊ້ໃນການປັບປຸງຂະບວນການເຜີຍແຜ່ຂໍ້ມູນຂ່າວສານໃນຂັ້ນຕໍ່ໄປ ໃຫ້ສອດຄ່ອງກັບຄວາມຕ້ອງການຂອງຜູ້ອອກແຮງງານໃນຕະຫຼາດ ແລະ ລູກຄ້າຂອງຕະຫຼາດ, ຊຶ່ງຈະຍົກລະດັບຄວາມຮັບຮູ້ຂອງພວກເຂົາ ກ່ຽວກັບຄວາມສ່ຽງທີ່ພົວພັນກັບການສຳພັດກັບສັດປ່າທີ່ມີຊີວິດ ແລະ ມາດຕະການທີ່ສາມາດປະຕິບັດ ເພື່ອຫຼຸດຜ່ອນຄວາມສ່ຽງດັ່ງກ່າວ.

ຕະຫຼາດສົດມັກຈະມີປະຊາຊົນຈຳນວນຫຼາຍມາເປັນປະຈຳ, ຊຶ່ງສາມາດສ້າງໂອກາດເຜີຍແຜ່ຂໍ້ຄວາມຂ່າວສານ ທີ່ແນໃສ່ສຶກສາອົບຮົມຜູ້ອອກແຮງງານ ແລະ ຜູ້ມາຕະຫຼາດ ກ່ຽວກັບຄວາມປອດໄພດ້ານອາຫານ ແລະ ຄວາມສ່ຽງຂອງພະຍາດທີ່ສາມາດຕິດຕໍ່ຈາກສັດສູ່ຄົນ. ນອກຈາກນັ້ນ, ຊຸດເຄື່ອງມືຝຶກອົບຮົມຢ່າງເປັນລະບົບໃຫ້ແກ່ຜູ້ອອກແຮງງານໃນຕະຫຼາດ ແລະ ເຈົ້າຂອງຮ້ານຂາຍເຄື່ອງ ຈະຕ້ອງໄດ້ພັດທະນາ ແລະ ອອກແບບເພື່ອໃຫ້ມີການລົບກວນເວລາຄ້າຂາຍໜ້ອຍທີ່ສຸດ. ຂໍ້ຄວາມຂ່າວສານທີ່ສາມາດເຂົ້າໃຈໄດ້ງ່າຍ ຈະຕ້ອງສ້າງຂຶ້ນ ສຳລັບການເຜີຍແຜ່ໃນຫຼາຍເວທີ ລວມທັງຊ່ອງທາງສື່ສັງຄົມ ແລະ ໂທລະສັບມືຖື ເພື່ອສົ່ງເສີມການປ່ຽນແປງພຶດຕິກຳ.

ອຸປະກອນການສຶກສາອົບຮົມ “ຫ້າຫຼັກການສຳຄັນ ນຳໄປສູ່ອາຫານປອດໄພ” (five keys to safer food) ທີ່ສ້າງຂຶ້ນໂດຍອົງການອະນາໄມໂລກ (WHO) ໄດ້ສະໜອງຂໍ້ມູນຂ່າວສານພື້ນຖານ ກ່ຽວກັບຄວາມປອດໄພດ້ານອາຫານ, ຊຶ່ງອຸປະກອນດັ່ງກ່າວ ຖືກຈັດໃຫ້ມີໄວ້ແລ້ວ.[23]

## ເອກະສານອ້າງອີງ


1. OIE. April 2020. Statement of the OIE Wildlife Working Group, April 2020 - Wildlife Trade and Emerging Zoonotic Diseases *(ຖະແຫຼງການຂອງໜ່ວຍງານວິຊາການດ້ານສັດປ່າ ຂອງອົງການສຸຂະພາບສັດສາກົນ ກ່ຽວກັບການຄ້າຂາຍສັດປ່າ ແລະ ພະຍາດທີ່ສາມາດຕິດຕໍ່ຈາກສັດສູ່ຄົນ ທີ່ເກີດຂຶ້ນໃໝ່).* (https://www.oie.int/fileadmin/Home/eng/Our_scient ific_expertise/docs/pdf/COV-19/A_OIEWildlifeTradeStatement_April2020.pdf
2. FAO. Food safety in the time of COVID-19 *(ຄວາມປອດໄພຂອງອາຫານ ໃນໄລຍະການລະບາດພະຍາດໂຄວິດ-19)* (2020) http://www.fao.org/3/ca8623en/CA8623EN.pdf
3. Wendong Li, Zhengli Shi, Meng Yu, Wuze Ren, *et al.* Bats are natural reservoirs of SARS-like coronaviruses (*ເຈຍ ແມ່ນແຫຼ່ງບໍ່ເກີດທຳມະຊາດ ຂອງເຊື້ອໄວຣັດໂຄໂຣນາທີ່ຄືກັນກັບເຊື້ອພະຍາດຊາສ).* Science 310, 676-679, (2005). https://science.sciencemag.org/content/310/5748/676
4. Ren, Li-Li; Wang, Ye-Ming; *et.al.* Identification of a novel coronavirus causing severe pneumonia in human *(ການກວດຫາເຊື້ອຈຸລະໂລກສາຍພັນໃໝ່ ທີ່ເຮັດໃຫ້ເກີດພະຍາດອັກເສບປອດຮ້າຍແຮງໃນຄົນ),* Chin Med J 133, 1015-1024 (2020). doi: 10.1097/cm9.0000000000000722
5. Zhong, NS, Zheng, BJ et. al. Epidemiology and cause of severe acute respiratory syndrome (SARS) in Guangdong, People's Republic of China, in February, 2003 *(ພະຍາດລະບາດວິທະຍາ ແລະ ສາເຫດຂອງພະຍາດອັກເສບລະບົບທາງຫາຍໃຈຮຸນແຮງ (ພະຍາດຊາສ) ຢູ່ກວາງຕຸ້ງ, ສາທາລະນະລັດ ປະຊາຊົນຈີນ, ໃນເດືອນກຸມພາ 2003).* Lancet; 362: 1353–58. (2003) https://doi.org/10.1016/S0140-6736(03)14630-2
6. Guan, Y, Zheng, BJ *et al.* Isolation and Characterization of Viruses Related to the SARS Coronavirus from Animals in Southern *China (ການແຍກປ່ຽວ ແລະ ການກຳນົດລັກສະນະຂອງເຊື້ອຈຸລະໂລກທີ່ພົວພັນກັບເຊື້ອຈຸລະໂລກທີ່ເຮັດໃຫ້ເກີດພະຍາດຊາຣ໌ ຈາກສັດ ຢູ່ພາກໃຕ້ຂອງຈີນ).* Science; 302, 276-278, (2003). Doi: 10.1126/science.1087139
7. Mounts, A.W., Kwong, H. et. al. Case-Control Study of Risk Factors for Avian Influenza A (H5N1) Disease, Hong Kong, *1997 (ການສຶກສາປັດໄຈຄວາມສ່ຽງຂອງພະຍາດໄຂ້ຫວັດສັດປີກ ສາຍພັນ A (H5N1), ຮົງກົງ, 1997).* J Infect Dis; 180, 505–508, (1999). https://doi.org/10.1086/314903
8. WHO. A Guide to Healthy Food Markets *(ຂໍ້ແນະນຳ ສຳລັບຕະຫຼາດອາຫານທີ່ມີສຸຂານາໄມດີ)* (2006) https://www.who.int/foodsafety/capacity/healthy_m arketplaces/en/
9. Kuiken, T., Leighton, FA, et al, Pathogen Surveillance in Animals *(ການເຝົ້າລະວັງເຊື້ອພະຍາດໃນສັດ). Science* ; 309, 1680-1681 (2005). https://doi.org/10.1126/science.1113310
10. Van Dorn, HR. Emerging Infectious Diseases Medicine *(ຢາປົວພະຍາດຕິດຕໍ່ທີ່ເກີດຂຶ້ນໃໝ່)* (Abingdon). 42: 60–63, (2014). Published online 2013 Dec 21. doi:10.1016/j.mpmed.2013.10.014
11. Darnell, k. et al (2004) Inactivation of the coronavirus that induces severe acute respiratory syndrome, SARS-CoV. *(ການຢັບຢັ້ງເຊື້ອໄວຣັດໂຄໂຣນາ ທີ່ພາໃຫ້ເກີດພະຍາດອັກເສບລະບົບທາງຫາຍໃຈຮຸນແຮງ, SARS-CoV).* J Vir Methods. 121, 85-91
12. Zhang, X et al. Strategies to trace back the origin of COVID-19 *(ຍຸດທະສາດເພື່ອຊອກຫາຮ່ອງຮອຍແຫຼ່ງທີ່ມາຂອງພະຍາດໂຄວິດ-19).* J Infect. Vol 80, 39-40. (2020). https://doi.org/10.1016/j.jinf.2020.03.032
13. FAO. Wildlife farming and domestication in: Wildlife and food security in Africa *(ການລ້ຽງສັດປ່າໃນຟາມລ້ຽງສັດ ແລະ ການຝຶກແອບສັດປ່າໃຫ້ຄຸ້ນ: ສັດປ່າ ແລະ ຄວາມໝັ້ນຄົງທາງດ້ານອາຫານ ຢູ່ອາຟຣິກາ)* (1997). http://www.fao.org/3/w7540e/w7540e0f.htm
14. OIE. Terrestrial Animal Health *Code (ປະມວນກົດໝາຍ ວ່າດ້ວຍສຸຂະພາບຂອງສັດເທິງບົກ)* (2019). https://www.oie.int/standard-setting/terrestrialcode/access-online/

15. FAO/OIE/WHO. FSO/OIE/WHO Stop the spread: Measures to stop the spread of highly pathogenic bird flu at its source *(ມາດຕະການເພື່ອຢຸດການແພ່ກະຈາຍຢ່າງໄວວາ ຂອງພະຍາດໄຂ້ຫວັດສັດປີດ ຢູ່ແຫຼ່ງເກີດຂອງມັນ)* (2005) https://www.who.int/influenza/resources/documents/ stop_spread_bird_flu/en/
16. WHO. WHO recommendations to reduce risk of transmission of emerging pathogens from animals to humans in live animal markets or animal product markets *(ຂໍ້ສະເໜີແນະ ຂອງອົງການອະນາໄມໂລກ ເພື່ອຫຼຸດຜ່ອນຄວາມສ່ຽງຂອງການຕິດຕໍ່ ຂອງເຊື້ອພະຍາດທີ່ເກີດຈາກສັດສູ່ຄົນ ໃນຕະຫຼາດສັດມີຊີວິດ ຫຼື ຕະຫຼາດຜະລິດ ຕະພັນສັດ).* 26 March 2020. https://apps.who.int/iris/rest/bitstreams/1278909/retr ieve
17. World Health Organization, Regional Office for South-East Asia. (2006). Public health interventions for prevention and control of avian influenza *(ການແຊກແຊງຂອງສາທາລະນະສຸກ ເພື່ອສະກັດກັ້ນ ແລະ ຄວບຄຸມພະຍາດໄຂ້ຫວັດສັດປີກ).* WHO Regional Office for South-East Asia. https://apps.who.int/iris/handle/10665/205700
18. OIE. OIE Competency Guidelines for Veterinary Paraprofessionals *(ປຶດແນະນຳຂອງອົງການສຸຂະພາບສັດໂລກ ກ່ຽວກັບຄວາມສາມາດ ສຳລັບຜູ້ຊ່ວຍນັກວິຊາຊີບດ້ານສັດຕະວະແພດ)* (2018) https://www.oie.int/fileadmin/Home/eng/Support_to_OIE_Members/docs/pdf/A_Competence.pdf
19. WHO. Surveillance of foodborne diseases *(ການເຝົ້າລະວັງພະຍາດທີ່ເກີດຈາກອາຫານ).* 26 January 2018. https://www.who.int/foodsafety/areas_work/foodbor ne-diseases/fbd_surveillance/en/
20. OIE. Questions and Answers COVID-19 *(ຄຳຖາມ ແລະ ຄຳຕອບ ກ່ຽວກັບພະຍາດໂຄວິດ-19).* https://www.oie.int/scientific-expertise/specificinformation-and-recommendations/questions-andanswers-on-2019novel-coronavirus/
21. FAO/OIE/WHO. Influenza and other emerging zoonotic diseases at the human-animal interface *(ໄຂ້ຫວັດໃຫຍ່ ແລະ ພະຍາດອື່ນໆທີ່ສາມາດຕິດຕໍ່ຈາກສັດສູ່ຄົນ ທີ່ເກີດຂຶ້ນໃໝ່ ໃນເງື່ອນໄຂຂອງການພົວພັນ ລະຫວ່າງ ຄົນ ແລະ ສັດ)* (2010). http://www.fao.org/3/a-i1963e.pdf
22. WHO. Healthy Market Project: reducing risks of avian influenza transmission in traditional food market settings *(ຫຼຸດຜ່ອນຄວາມສ່ຽງຂອງການຕິດຕໍ່ຂອງພະຍາດໄຂ້ຫວັດສັດປີກ ໃນບໍລິເວນຕະຫຼາດອາຫານພື້ນເມືອງ).* (2010) USAID funded project AAG-P-00-01-0001. WHO, Geneva.
23. WHO. Five keys to safer food manual *(ຄູ່ມື ຫ້າກຸນແຈເພື່ອເຮັດໃຫ້ອາຫານປອດໄພ)* (2006) http://apps.who.int/iris/bitstream/10665/43546/1/978 9241594639_eng.pdf?ua=1
24. Can, O.E. et al. Dealing in deadly pathogens: taking stock of the legal trade in live wildlife and potential risk to human health *(ການປະຕິບັດຕໍ່ກັບເຊື້ອພະຍາດທີ່ເປັນອັນຕະລາຍຕໍ່ຊີວິດ: ການສຳຫຼວດສະພາບການຄ້າຂາຍສັດປ່າທີ່ມີຊີວິດ ຢ່າງຖືກຕ້ອງຕາມກົດໝາຍ ແລະ ຄວາມສ່ຽງທີ່ສາມາດເກີດຂຶ້ນຕໍ່ສຸຂະພາບຂອງຄົນ).* Glob Ecol Conserv. Vol 17, January 2019. https://doi.org/10.1016/j.gecco.2018.e00515
25. FAO. 2019. Technical guidance principles of risk-based meat inspection and their application *(ຂໍ້ແນະນຳດ້ານວິຊາການ ກ່ຽວກັບຫຼັກການກວດກາຊີ້ນທີ່ອີງໃສ່ຄວາມສ່ຽງ ແລະ ການນຳໃຊ້ຕົວຈິງ).* Rome, FAO. http://www.fao.org/3/ca5465en/CA5465EN.pdf
26. El Masry, I., von Dobschuetz, S., Plee, L., Larfaoui, F., Yang, Z., Song, J., Pfeiffer, D., Calvin, S., Roberts, H., Lorusso, A., Barton-Behravesh, C., Zheng, Z., Kalpravidh, W. & Sumption, K. 2020. Exposure of humans or animals to SARS-CoV-2 from wild, livestock, companion and aquatic animals: Qualitative exposure assessment *(ການສຳພັດຂອງຄົນ ຫຼື ສັດ ກັບພະຍາດ SARS-CoV-2 ຈາກສັດປ່າ, ສັດລ້ຽງ, ສັດລ້ຽງເປັນເພື່ອນ ແລະ ສັດນ້ຳ: ການປະເມີນການສຳພັດທາງດ້ານຄຸນນະພາບ).* FAO animal production and health, Paper 181. Rome, FAO. https://doi.org/10.4060/ca9959en
27. Xu RH, He JF, Evans MR, et al. Epidemiologic clues to SARS origin in China *(ຮ່ອງຮອຍຂອງການສຶກສາພະຍາດລະບາດ ກ່ຽວກັບແຫຼ່ງເກີດຂອງພະຍາດຊາສ ຢູ່ຈີນ). Emerg Infect Dis*. 2004;10(6):1030-1037. doi:10.3201/eid1006.030852

28. WHO. Mask use in the context of COVID-19 Interim guidance *(ຂໍ້ແນະນໍາຊົ່ວຄາວ - ການນໍາໃຊ້ຜ້າອັດປາກ-ດັງ ໃນເງື່ອນໄຂຂອງການລະບາດພະຍາດໂຄວິດ-19).* (1 December 2020) https://www.who.int/publications/i/item/advice-onthe-use-of-masks-in-the-community-during-homecare-and-in-healthcare-settings-in-the-context-ofthe-novel-coronavirus-(2019-ncov)-outbreak
29. WHO. Roadmap to improve and ensure good indoor ventilation in the context of COVID-19 *(ແຜນດໍາເນີນງານ ເພື່ອປັບປຸງ ແລະ ຮັບປະກັນການລະບາຍອາກາດທີ່ດີ ໃນເງື່ອນໄຂຂອງການລະບາດພະຍາດໂຄວິດ-19)* (1 March 2021) https://www.who.int/publications/i/item/9789240021280


ອົງການອະນາໄມໂລກ (WHO) ສືບຕໍ່ຕິດຕາມສະພາບການຢ່າງໃກ້ຊິດ ກ່ຽວກັບການປ່ຽນແປງທີ່ສາມາດມີຜົນສະທ້ອນຕໍ່ຂໍ້ແນະນໍາຊົ່ວຄາວສະບັບນີ້. ຖ້າຫາກມີປັດໃຈໃດໜຶ່ງປ່ຽນແປງ, ອົງການ WHO ກໍຈະອອກສະບັບປັບປຸງຕື່ມ. ຖ້າຫາກບໍ່ມີການປ່ຽນແປງ, ເອກະສານຂໍ້ແນະນໍາຊົ່ວຄາວສະບັບນີ້ ຈະໝົດອາຍຸໃນເວລາ 2 ປີ ຫຼັງຈາກວັນທີຂອງການພິມຈໍາໜ່າຍ.

© World Health Organization 2021. Some rights reserved. This work is available under the CC BY-NC-SA 3.0 IGO licence.

WHO reference number: WHO/2019-nCoV/Wet_Markets/2021.1